ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

ເລກທີ..607......./ຖວທ
ນະຄອນຫຼວງວຽງຈັນ, ວັນທີ..30 ກັນຍາ 2022.

# ຂໍ້ຕົກລົງ
# ວ່າດ້ວຍ ທຸລະກິດນຳທ່ຽວ

- ອີງຕາມ ກົດໝາຍ ວ່າດ້ວຍ ການທ່ອງທ່ຽວ ສະບັບປັບປຸງ ເລກທີ 32/ສພຊ, ລົງວັນທີ 24 ກໍລະກົດ 2013;
- ອີງຕາມ ດຳລັດ ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວ ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ສະບັບເລກທີ 678/ນຍ, ລົງວັນທີ 21 ທັນວາ 2021;
- ອີງຕາມ ຄຳສັ່ງຂອງນາຍົກລັດຖະມົນຕີ ວ່າດ້ວຍ ການປັບປຸງວຽກງານບໍລິການ ການອອກໃບອະນຸຍາດລົງທຶນ ແລະ ການອອກໃບອະນຸຍາດດຳເນີນທຸລະກິດ ສະບັບເລກທີ 03/ນຍ, ລົງວັນທີ 21 ມັງກອນ 2020.

## ລັດຖະມົນຕີ ອອກຂໍ້ຕົກລົງ:
## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການສົ່ງເສີມ ແລະ ຄຸ້ມຄອງ ທຸລະກິດນຳທ່ຽວ ໃຫ້ມີຄວາມເປັນລະບຽບຮຽບຮ້ອຍ, ສະຫງົບ, ປອດໄພ, ມີຄວາມສະດວກ, ວ່ອງໄວ, ໂປ່ງໃສ, ຍຸຕິທຳ, ຖືກຕ້ອງ, ມີຄຸນນະພາບ ແລະ ມາດຕະຖານ ເພື່ອປົກປ້ອງສິດ ຜົນປະໂຫຍດຂອງບຸກຄົນ, ນິຕິບຸກຄົນ ແລະ ນັກທ່ອງທ່ຽວ ທີ່ກ່ຽວຂ້ອງກັບທຸລະກິດນຳທ່ຽວ ແນໃສ່ ດຶງດູດນັກທ່ອງທ່ຽວ, ນັກລົງທຶນ, ສົ່ງເສີມການ ທ່ອງທ່ຽວພາຍໃນ ເຊື່ອມໂຍງກັບພາກພື້ນ ແລະ ສາກົນ, ສ້າງລາຍຮັບ, ສ້າງວຽກເຮັດງານທຳ, ກະຈາຍລາຍໄດ້ສູ່ສັງຄົມ ປະກອບສ່ວນເຂົ້າໃນການພັດທະນາປະເທດຊາດ ແລະ ການທ່ອງທ່ຽວ ຂອງ ສປປ ລາວ ໃຫ້ຂະຫຍາຍຕົວ ຕາມທິດສີຂຽວ ແລະ ຍືນຍົງ.

**ມາດຕາ 2 ທຸລະກິດນຳທ່ຽວ**

ທຸລະກິດນຳທ່ຽວ ແມ່ນ ຫົວໜ່ວຍທຸລະກິດບໍລິການ ດ້ານການນຳທ່ຽວ, ການໃຫ້ຂໍ້ມູນຂ່າວສານກ່ຽວກັບການທ່ອງທ່ຽວ, ການເດີນທາງ, ອາຫານ, ສະຖານທີ່ພັກແຮມ, ສະຖານທີ່ທ່ອງທ່ຽວ, ກິດຈະກຳທ່ອງທ່ຽວ, ພະນັກງານນຳທ່ຽວ ແລະ ການບໍລິການ ຕົວແທນທຸລະກິດການທ່ອງທ່ຽວ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບ ທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ການທ່ອງທ່ຽວ** (Tourism) ໝາຍເຖິງ ການເດີນທາງຈາກທີ່ຢູ່ອາໄສຂອງຕົນໄປທ້ອງຖິ່ນອື່ນ ຫຼື ປະເທດອື່ນ ເພື່ອການຢ້ຽມຢາມ, ການທ່ຽວຊົມ, ການພັກຜ່ອນ, ການມ່ວນຊື່ນ, ການແລກປ່ຽນວັດທະນະທຳ, ການກິລາ, ການສົ່ງເສີມສຸຂະພາບ, ການສຶກສາຄົ້ນຄວ້າ, ການວາງສະແດງ, ການປະຊຸມ ແລະ ອື່ນໆ ໂດຍບໍ່ມີຈຸດປະສົງ, ຊອກເຮັດວຽກ, ປະກອບອາຊີບ ເພື່ອຫາລາຍໄດ້ ໃນຮູບແບບຕ່າງໆ;

2. **ລາຍການທ່ອງທ່ຽວ** (Program Tour) ໝາຍເຖິງ ເອກະສານຢັ້ງຢືນກິດຈະກຳທ່ອງທ່ຽວ ທີ່ກຳນົດເປັນລາຍການບໍລິການ ຂອງແຕ່ລະກິດຈະກຳທ່ອງທ່ຽວ ລວມທັງການເດີນທາງ, ອາຫານ, ສະຖານທີ່ພັກແຮມ, ສະຖານທີ່ທ່ອງທ່ຽວ, ຄ່າໃຊ້ຈ່າຍ ແລະ ຜູ້ນຳທ່ຽວ ໂດຍມີກຳນົດເວລາໃນການບໍລິການ;

3. **ທຸລະກິດທ່ອງທ່ຽວ** ໝາຍເຖິງ ການບໍລິການຂອງຫົວໜ່ວຍທຸລະກິດ ທາງດ້ານການເດີນທາງ, ອາຫານ, ການພັກແຮມ, ການນຳທ່ຽວ ແລະ ກິດຈະກຳອື່ນໆ ໃຫ້ແກ່ນັກທ່ອງທ່ຽວ;

4. **ບໍລິສັດຕົວແທນທຸລະກິດການທ່ອງທ່ຽວ** (Travel Agency) ໝາຍເຖິງ ຫົວໜ່ວຍທຸລະກິດທີ່ເປັນນາຍໜ້າ ຫຼື ຕົວແທນການຂາຍປີ້ພາຫະນະ, ບັດເຂົ້າຊົມສະຖານທີ່ທ່ອງທ່ຽວ, ບັດເຂົ້າຊົມງານເທດສະການທ່ອງທ່ຽວ, ການຈອງອາຫານ, ສະຖານທີ່ພັກແຮມ, ລາຍການທ່ອງທ່ຽວ, ການຈັດສົ່ງນັກທ່ອງທ່ຽວໃຫ້ບໍລິສັດນຳທ່ຽວທີ່ກ່ຽວຂ້ອງ ເພື່ອຕອບສະໜອງຄວາມຕ້ອງການຂອງນັກທ່ອງທ່ຽວ ທີ່ມີຄວາມສົນໃຈ;

5. **ບໍລິສັດນຳທ່ຽວ** (Tour Operator) ໝາຍເຖິງ ຫົວໜ່ວຍທຸລະກິດ ທີ່ໃຫ້ບໍລິການໂດຍກົງຕໍ່ນັກທ່ອງທ່ຽວທີ່ມີຄວາມສົນໃຈກ່ຽວກັບການທ່ອງທ່ຽວ, ລາຍການທ່ອງທ່ຽວ, ຂໍ້ມູນຂ່າວສານການເດີນທາງ, ການທ່ອງທ່ຽວ, ອາຫານ, ສະຖານທີ່ພັກແຮມ, ສະຖານທີ່ທ່ອງທ່ຽວ, ການຈັດງານເທດສະການ ແລະ ກິດຈະກຳອື່ນໆ ກ່ຽວກັບການທ່ອງທ່ຽວ ໂດຍມີພະນັກງານນຳທ່ຽວ ບົນພື້ນຖານຂອງລາຍການທ່ອງທ່ຽວ;

6. **ນັກທ່ອງທ່ຽວທີ່ເດີນທາງທ່ອງທ່ຽວດ້ວຍຕົນເອງ** ໝາຍເຖິງ ນັກທ່ອງທ່ຽວພາຍໃນ ຫຼື ຕ່າງປະເທດ ທີ່ເດີນທາງທ່ອງທ່ຽວຢູ່ພາຍໃນ ຫຼື ຕ່າງປະເທດ ໂດຍບໍ່ຜ່ານການບໍລິການຂອງບໍລິສັດນຳທ່ຽວ ຫຼື ບໍ່ຊື້ການບໍລິການຂອງບໍລິສັດນຳທ່ຽວ, ບໍ່ມີລາຍການທ່ອງທ່ຽວ, ບໍ່ມີພະນັກງານນຳທ່ຽວ ແລະ ຫົວໜ້າທົວ ຕິດຕາມອຳນວຍຄວາມສະດວກໃຫ້ຂໍ້ມູນ, ອະທິບາຍຊີ້ແຈງ ກ່ຽວກັບ ສະຖານທີ່ທ່ອງທ່ຽວ, ປະຫວັດຄວາມເປັນມາຂອງສະຖານທີ່ທ່ອງທ່ຽວ, ຊຶ່ງນັກທ່ອງທ່ຽວກຸ່ມນີ້ ມັກຈະສຶກສາຫາຂໍ້ມູນການທ່ອງທ່ຽວ, ການເດີນທາງ, ອາຫານ, ສະຖານທີ່ພັກແຮມ, ສະຖານທີ່ທ່ອງທ່ຽວ ແລະ ກິດຈະກຳທ່ອງທ່ຽວ ດ້ວຍຕົນເອງ ແລະ ໃຊ້ເວລາ ເພື່ອການທ່ອງທ່ຽວ ຍາວນານ ແຕ່ສູງສຸດບໍ່ເກີນລະບຽບການເຂົ້າ-ອອກເມືອງ ອະນຸຍາດ;

7. **ນັກທ່ອງທ່ຽວທີ່ເດີນທາງທ່ອງທ່ຽວ ໂດຍຜ່ານການບໍລິການຂອງບໍລິສັດນຳທ່ຽວ** ໝາຍເຖິງ ນັກທ່ອງທ່ຽວ ທີ່ຊື້ການບໍລິການຂອງບໍລິສັດນຳທ່ຽວຕາມລາຍການທ່ອງທ່ຽວ ຫຼື ສ່ວນໃດສ່ວນໜຶ່ງຂອງລາຍການບໍລິສັດນຳທ່ຽວໃດໜຶ່ງ ທີ່ກ່ຽວຂ້ອງ ໂດຍມີກຳນົດເວລາການເດີນທາງໄປ-ກັບ ທີ່ແນ່ນອນ, ໄດ້ຮັບການບໍລິການດ້ານຂໍ້ມູນຂ່າວສານການທ່ອງທ່ຽວ, ການເດີນທາງ, ອາຫານ, ສະຖານທີ່ພັກແຮມ, ສະຖານທີ່ທ່ອງທ່ຽວ, ກິດຈະກຳທ່ອງທ່ຽວ ແລະ ມີພະນັກງານນຳທ່ຽວ ຕິດຕາມໄປຕາມລາຍການທ່ອງທ່ຽວ ໂດຍມີການອະທິບາຍຊີ້ແຈງກ່ຽວກັບສະຖານທີ່ທ່ອງທ່ຽວ ຫຼື ປະຫວັດຄວາມເປັນຂອງສະຖານທີ່ທ່ອງທ່ຽວ ຢ່າງຖືກຕ້ອງ, ຊຶ່ງນັກທ່ອງທ່ຽວກຸ່ມນີ້ ສ່ວນໃຫຍ່ ຈະເຂົ້າມາທ່ອງທ່ຽວເປັນກຸ່ມ ຫຼື ເປັນຄະນະ, ເປັນຄາລະວານ ໂດຍໃຊ້ເວລາ ເພື່ອການທ່ອງທ່ຽວເປັນໄລຍະຍາວຕາມລາຍການທ່ອງທ່ຽວ, ແຕ່ສູງສຸດບໍ່ເກີນລະບຽບການເຂົ້າ-ອອກເມືອງ ອະນຸ ຍາດ;

8. **ກິດຈະກຳທ່ອງທ່ຽວທາງບົກ** ໝາຍເຖິງ ການຈັດຕັ້ງ ແລະ ການເຄື່ອນໄຫວດຳເນີນການໃດໜຶ່ງ ຫຼື ທັງໝົດ ກ່ຽວກັບການທ່ອງທ່ຽວ ທີ່ດຳເນີນການຢູ່ເທິງບົກ ເຊັ່ນ: ການທ່ຽວຊົມພູຜາ, ປ່າໄມ້, ບູຮານສະຖານ, ປູຊະນີຍະສະຖານ, ສາທາລະນະສະຖານ, ວັດວາອາຣາມ, ຮ່ອງຮອຍປະຫວັດສາດ, ວິຖີດຳລົງການຊີວິດຂອງປະຊາຊົນ, ຫ້າງສັບພະສິນຄ້າ, ສະຖານທີ່ທ່ອງທ່ຽວທາງທຳມະຊາດ, ວັດທະນະທຳ, ປະຫວັດສາດ ລວມທັງການຂີ່ສະລີງ, ໂດດ, ເຕັ້ນ, ໂຕນ, ປີນຜາ, ຂຶ້ນພູ, ໄຕ່ເຊືອກ, ຂັບ-ຂີ່ພາຫະນະ ທີ່ເປັນຂະບວນ, ທີ່ເປັນການທ້າທາຍ ເພື່ອແຂ່ງຂັນ, ເພື່ອສຸຂະພາບ, ກິດຈະກຳທີ່ມີຄວາມທ້າທາຍ-ຜະຈົນໄພ ແລະ ກິດຈະກຳອື່ນໆ;

9. **ກິດຈະກຳທ່ອງທ່ຽວທາງນໍ້າ** ໝາຍເຖິງ ການຈັດຕັ້ງ ແລະ ການເຄື່ອນໄຫວດຳເນີນການໃດໜຶ່ງ ຫຼື ທັງໝົດ ກ່ຽວກັບການທ່ອງທ່ຽວ ທີ່ດຳເນີນການຢູ່ບ່ອນນໍ້າ ເຊັ່ນ: ການຂັບ-ຂີ່ເຮືອ, ລ່ອງແພ, ກົງເບັງ ແລະ ວັດຖຸປະກອນອື່ນທີ່ຂັບເຄື່ອນດ້ວຍຄົນ, ສັດ ຫຼື ເຄື່ອງຈັກ ທີ່ນຳໃຊ້ເຂົ້າໃນກິດຈະກຳທ່ອງທ່ຽວທາງນໍ້າ, ການລ່ອງແກ້ງ-ຜະຈົນໄພ, ການລ່ອງ-ລອຍນໍ້າ, ການດຳນໍ້າ ແລະ ກິດຈະກຳອື່ນໆ;

10. **ກິດຈະກຳທ່ອງທ່ຽວທາງອາກາດ** ໝາຍເຖິງ ການຈັດຕັ້ງ ແລະ ການເຄື່ອນໄຫວດຳເນີນການໃດໜຶ່ງ ຫຼື ທັງໝົດ ກ່ຽວກັບການທ່ອງທ່ຽວ ທີ່ດຳເນີນການຢູ່ຊັ້ນອາວະກາດ ຫຼື ບ່ອນຟ້າ ເຊັ່ນ: ການຂັບ-ຂີ່ເຮືອບິນ, ຍານພາຫະນະ ທີ່ຂັບເຄື່ອນດ້ວຍຄົນ ຫຼື ເຄື່ອງຈັກ ແລະ ອື່ນໆ ເຊັ່ນ: ພາລາມ່ເຕີ, ບາລູນ, ໂດດຈ້ອງ, ການໂດດ-ເຕັ້ນ ແລະ ກິດຈະກຳອື່ນໆ;

11. **ກິດຈະກຳທ່ອງທ່ຽວທີ່ຕິດພັນກັບສະຖານທີ່ທ່ອງທ່ຽວທຳມະຊາດ** ໝາຍເຖິງ ການຈັດຕັ້ງ ແລະ ການເຄື່ອນໄຫວ ດຳເນີນການໃດໜຶ່ງ ຫຼື ທັງໝົດ ກ່ຽວກັບການທ່ອງທ່ຽວ ທີ່ດຳເນີນຢູ່ຕາມສະຖານທີ່ທ່ອງທ່ຽວທຳມະຊາດ ຫຼື ສະຖານທີ່ທ່ອງທີ່ເກີດຂຶ້ນຕາມທຳມະຊາດ;

12. **ກິດຈະກຳທ່ອງທ່ຽວທີ່ຕິດພັນກັບສະຖານທີ່ທ່ອງທ່ຽວທີ່ມະນຸດສ້າງຂຶ້ນ** ໝາຍເຖິງການຈັດຕັ້ງ ແລະ ການເຄື່ອນໄຫວດຳເນີນການໃດໜຶ່ງ ຫຼື ທັງໝົດ ກ່ຽວກັບການທ່ອງທ່ຽວ ທີ່ດຳເນີນຢູ່ຕາມສະຖານທີ່ທ່ອງທ່ຽວທຳມະຊາດ, ວັດທະນະທຳ, ປະຫວັດສາດ ແລະ ກະສິກຳ ທີ່ມະນຸດສ້າງຂຶ້ນ, ປະດິດຄິດແຕ່ງຂຶ້ນ ຫຼື ຈຳລອງຂຶ້ນ.

### ມາດຕາ 4 ນະໂຍບາຍຂອງລັດ ກ່ຽວກັບວຽກງານທຸລະກິດນຳທ່ຽວ

ລັດ ສົ່ງເສີມ ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ ພາຍໃນ ແລະ ຕ່າງປະເທດ ສ້າງຕັ້ງ ແລະ ດຳເນີນກິດຈະ ການທຸລະກິດນຳທ່ຽວ ດ້ວຍການວາງນະໂຍບາຍ ເພື່ອສ້າງສະພາບແວດລ້ອມ ສິ່ງອຳນວຍຄວາມສະດວກດ້ານຕ່າງໆ ເຊັ່ນ ການສ້າງພື້ນຖານໂຄງລ່າງ, ການສະໜອງຂໍ້ມູນ, ນະໂຍບາຍດ້ານພາສີ, ສ່ວຍສາອາກອນ, ແຮງງານ, ສິດນຳໃຊ້ທີ່ດິນ , ການເຂົ້າເຖິງແຫຼ່ງທຶນ, ຄວາມສະເໝີພາບຕໍ່ໜ້າກົດໝາຍ, ການປົກປ້ອງສິດ, ຜົນປະໂຫຍດ ແລະ ນະໂຍບາຍອື່ນໆ ທີ່ເອື້ອອຳນວຍຕໍ່ທຸລະກິດນຳທ່ຽວ ບົນພື້ນຖານກົດໝາຍ ແລະ ລະບຽບການກ່ຽວຂ້ອງ ຂອງ ສປປ ລາວ.

### ມາດຕາ 5 ຫຼັກການ ກ່ຽວກັບ ວຽກງານທຸລະກິດນຳທ່ຽວ

ການດຳເນີນທຸລະກິດນຳທ່ຽວ ຕ້ອງປະຕິບັດຕາມຫຼັກການ ດັ່ງນີ້:

1. ຮັບປະກັນ ຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບປອດໄພ ແລະ ຄວາມເປັນລະບຽບຮຽບຮ້ອຍ ຂອງສັງຄົມ;
2. ສອດຄ່ອງກັບແນວທາງນະໂຍບາຍ, ຍຸດທະສາດການທ່ອງທ່ຽວ, ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ, ການຂະຫຍາຍຕົວຂອງເສດຖະກິດ-ສັງຄົມ ໃນແຕ່ລະໄລຍະ;
3. ຍົກລະດັບຊີວິດການເປັນຢູ່ຂອງປະຊາຊົນລາວ ໃຫ້ດີຂຶ້ນ;
4. ມີຄວາມສະດວກ, ວ່ອງໄວ, ໂປ່ງໃສ, ມີຄຸນນະພາບ ແລະ ມາດຕະຖານ;
5. ຮັບປະກັນ ການປົກປ້ອງສິດ, ຜົນປະໂຫຍດ, ຄວາມປອດໄພຕໍ່ສຸຂະພາບ, ຊັບສິນຂອງລັດ, ຂອງປະຊາຊົນ, ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ, ນັກທ່ອງທ່ຽວ, ຜູ້ໃຊ້ບໍລິການ ແລະ ຜູ້ປະກອບກິດຈະການທຸລະກິດນຳທ່ຽວ;
6. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລະ ເພີ່ມທະວີການຄຸ້ມຄອງລັດ, ຄຸ້ມຄອງສັງຄົມຢ່າງລວມສູນ ເປັນເອກະພາບທົ່ວປະເທດ;
7. ເສີມຂະຫຍາຍ ພັດທະນາຜະລິດຕະພັນທ່ອງທ່ຽວ, ສະຖານທີ່ທ່ອງທ່ຽວ, ການນຳທ່ຽວ, ລາຍການທ່ອງທ່ຽວ, ສີມືແຮງງານ, ການໂຄສະນາການທ່ອງທ່ຽວແລະ ການມີສ່ວນຮ່ວມຂອງປະຊາຊົນລາວເພື່ອຄວາມຍືນຍົງ;
8. ປົກປັກຮັກສາສິ່ງແວດລ້ອມ, ສະຖານທີ່ທຳມະຊາດ, ມູນເຊື້ອປະຫວັດສາດ ແລະ ວັດທະນະທຳດີງາມຂອງຊາດ.

### ມາດຕາ 6 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ, ນັກທ່ອງທ່ຽວພາຍໃນ ແລະ ຕ່າງປະເທດທີ່ກ່ຽວຂ້ອງກັບທຸລະກິດນຳທ່ຽວ ຢູ່ ສປປ ລາວ.

### ມາດຕາ 7 ການຮ່ວມມືສາກົນ

ລັດ ສົ່ງເສີມການພົວພັນ ແລະ ການຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານທຸລະກິດນຳທ່ຽວ ຫຼື ວຽກງານການທ່ອງທ່ຽວ, ການພັດທະນາ, ການໂຄສະນາສົ່ງເສີມ, ການຄຸ້ມຄອງ, ສີມືແຮງງານ ແລະ ການບໍລິການດ້ານການທ່ອງທ່ຽວ ດ້ວຍການແລກປ່ຽນບົດຮຽນ, ຄວາມຮູ້, ປະສົບການ, ຂໍ້ມູນຂ່າວສານ, ເຕັກໂນໂລຊີ, ການຝຶກອົບ

ຣິມສ້າງຄວາມເຂັ້ມແຂງ, ການເຂົ້າເຖິງແຫຼ່ງທຶນ, ການທັດສະນະສຶກສາ, ການຮຽນ-ການສອນ, ການມີສ່ວນຮ່ວມຂອງສັງຄົມ ແລະ ອື່ນໆ ທີ່ເປັນປະໂຫຍດຕໍ່ວຽກງານທຸລະກິດນຳທ່ຽວ.

## ພາກທີ II
## ນະໂຍບາຍສົ່ງເສີມ, ກິດຈະການ ແລະ ອາຊີບສະຫງວນ

### ໝວດທີ 1
### ນະໂຍບາຍສົ່ງເສີມທຸລະກິດນຳທ່ຽວ

**ມາດຕາ 8 ນະໂຍບາຍສົ່ງເສີມການລົງທຶນ**

ລັດ ສົ່ງເສີມການລົງທຶນ, ການດຳເນີນທຸລະກິດ ຂອງບຸກຄົນ, ນິຕິບຸກຄົນ ພາຍໃນ ແລະ ຕ່າງປະເທດ ທີ່ຖືກຕ້ອງຕາມກົດໝາຍ ເພື່ອດຶງດູດນັກລົງທຶນ, ນັກທ່ອງທ່ຽວພາຍໃນ ໃຫ້ທ່ອງທ່ຽວຢູ່ພາຍໃນ ແລະ ນັກທ່ອງທ່ຽວຕ່າງປະເທດ ໃຫ້ເຂົ້າທ່ອງທ່ຽວ ຢູ່ ສປປ ລາວ ນັບມື້ນັບຂະຫຍາຍຕົວຂຶ້ນ, ປະກອບສ່ວນສ້າງລາຍຮັບ, ສ້າງວຽກເຮັດງານທຳ, ກະຈາຍລາຍໄດ້ສູ່ສັງຄົມ ໃນຕົວເມືອງ, ຊົນນະບົດ, ເຂດຊຸມຊົນ ແລະ ເຂດຫ່າງໄກສອກຫຼີກທຸລະກັນດານ.

**ມາດຕາ 9 ນະໂຍບາຍຍົກເວັ້ນພາສີ-ອາກອນ**

ຫົວໜ່ວຍທຸລະກິດນຳທ່ຽວ ທີ່ໄດ້ຮັບການສ້າງຕັ້ງ ແລະ ດຳເນີນທຸລະກິດນຳທ່ຽວ ຢ່າງຖືກຕ້ອງ ຢູ່ ສປປ ລາວ ຈະໄດ້ຮັບນະໂຍບາຍຍົກເວັ້ນພາສີ-ອາກອນ ການນຳເຂົ້າວັດຖຸອຸປະກອນ ທີ່ບໍ່ສາມາດຕອບສະໜອງຢູ່ພາຍໃນປະເທດ ເພື່ອຮັບໃຊ້ເຂົ້າໃນກິດຈະການທຸລະກິດນຳທ່ຽວ ບົນພື້ນຖານກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 10 ນະໂຍບາຍແຮງງານ**

ຫົວໜ່ວຍທຸລະກິດນຳທ່ຽວ ທີ່ໄດ້ຮັບການສ້າງຕັ້ງ ແລະ ດຳເນີນທຸລະກິດນຳທ່ຽວ ຢ່າງຖືກຕ້ອງ ຢູ່ ສປປ ລາວ ຈະໄດ້ຮັບນະໂຍບາຍການນຳເຂົ້າແຮງງານຕ່າງປະເທດ ຕາມກົດໝາຍ ວ່າດ້ວຍແຮງງານ ແລະ ລະບຽບການທີ່ກ່ຽວຂ້ອງ ຂອງ ສປປ ລາວ ບົນພື້ນຖານການນຳໃຊ້ແຮງງານຄົນລາວ ເປັນບຸລິມະສິດຕົ້ນຕໍ ແລະ ແຮງງານຄົນຕ່າງປະເທດ ເປັນສຳຮອງ.

### ໝວດທີ 2
### ກິດຈະການ ແລະ ອາຊີບສະຫງວນ

**ມາດຕາ 11 ກິດຈະການສະຫງວນ**

ລັດ ສະຫງວນບາງກິດຈະການ ຫົວໜ່ວຍທຸລະກິດນຳທ່ຽວ ໃຫ້ສະເພາະຄົນລາວ ຄື: ກິດຈະການທຸລະກິດ ຫຼື ບໍລິສັດນຳທ່ຽວພາຍໃນປະເທດ (Inbound) ແລະ ກິດຈະການທຸລະກິດ ບໍລິສັດນຳທ່ຽວໃນພື້ນທີ່ສະເພາະໃດໜຶ່ງ (Specific Area).

## ພາກທີ III
## ປະເພດ, ສິດ, ພັນທະ,
## ເງື່ອນໄຂ ແລະ ມາດຕະຖານ ຂອງຫົວໜ່ວຍທຸລະກິດນຳທ່ຽວ
## ໝວດທີ 1
## ປະເພດຂອງຫົວໜ່ວຍທຸລະກິດນຳທ່ຽວ

**ມາດຕາ 12 ປະເພດທຸລະກິດນຳທ່ຽວ**

ທຸລະກິດນຳທ່ຽວ ປະກອບມີ ມີ 2 ປະເພດ ຄື:

1. ບໍລິສັດນຳທ່ຽວ (Tour Operator);
2. ບໍລິສັດຕົວແທນທຸລະກິດການທ່ອງທ່ຽວ (Travel Agency).

**ມາດຕາ 13 ປະເພດການບໍລິການຂອງບໍລິສັດນຳທ່ຽວ**

ການບໍລິການຂອງບໍລິສັດນຳທ່ຽວ ປະກອບມີ 3 ປະເພດ ຄື:

1. ບໍລິສັດນຳທ່ຽວລະຫວ່າງປະເທດ;
2. ບໍລິສັດນຳທ່ຽວພາຍໃນປະເທດ;
3. ບໍລິສັດນຳທ່ຽວໃນພື້ນທີ່ສະເພາະໃດໜຶ່ງ.

## ໝວດທີ 2
## ສິດ ແລະ ພັນທະຂອງຫົວໜ່ວຍທຸລະກິດນຳທ່ຽວ

**ມາດຕາ 14 ສິດ ແລະ ພັນທະຂອງບໍລິສັດນຳທ່ຽວລະຫວ່າງປະເທດ**

ບໍລິສັດນຳທ່ຽວລະຫວ່າງປະເທດ ແມ່ນ ຫົວໜ່ວຍທຸລະກິດ ບໍລິການນຳເຂົ້າ ນັກທ່ອງທ່ຽວຕ່າງປະເທດ (Inbound) ແລະ/ຫຼື ສົ່ງອອກ ນັກທ່ອງທ່ຽວພາຍໃນປະເທດ (Outbound) ເພື່ອທ່ອງທ່ຽວຢູ່ສະຖານທີ່ທ່ອງທ່ຽວພາຍໃນ ຫຼື ຕ່າງປະເທດ ບົນພື້ນຖານຂອງລາຍການທ່ອງທ່ຽວ.

ບໍລິສັດນຳທ່ຽວລະຫວ່າງປະເທດ ມີສິດ ແລະ ພັນທະ ດັ່ງນີ້:

**ກ. ສິດ:**

1. ໂຄສະນາລາຍການທ່ອງທ່ຽວ, ຂໍ້ມູນຂ່າວສານກ່ຽວກັບການເດີນທາງ, ອາຫານ, ສະຖານທີ່ພັກແຮມ, ສະຖານທີ່ທ່ອງທ່ຽວ, ຜະລິດຕະພັນທ່ອງທ່ຽວ, ເທສະການ ງານສົ່ງເສີມສິນຄ້າ-ຜະລິດຕະພັນການທ່ອງທ່ຽວ ແລະ ກິດຈະກຳອື່ນໆ ເພື່ອການທ່ອງທ່ຽວ;
2. ບໍລິການນຳທ່ຽວພາຍໃນປະເທດ ແລະ/ຫຼື ຕ່າງປະເທດ;
3. ນຳເຂົ້າ (Inbound) ນັກທ່ອງທ່ຽວຕ່າງປະເທດ ເຂົ້າມາທ່ອງທ່ຽວພາຍໃນປະເທດ;
4. ສົ່ງອອກ (Outbound) ນັກທ່ຽວພາຍໃນ ໄປທ່ອງທ່ຽວຕ່າງປະເທດ;
5. ສ້າງລາຍການທ່ອງທ່ຽວເປັນເອກະລັກຂອງຕົນເອງ ໃຫ້ມີຫຼາກຫຼາຍຮູບແບບ ແລະ ຂາຍລາຍການທ່ອງທ່ຽວ ຢ່າງຖືກຕ້ອງ;
6. ສ້າງກິດຈະກຳທ່ອງທ່ຽວ ຫຼື ຜະລິດຕະພັນທ່ອງທ່ຽວເປັນເອກະລັກຂອງຕົນເອງ ໃຫ້ໄດ້ມາດຕະຖານ, ມີຫຼາກຫຼາຍຮູບແບບ ແລະ ບໍລິການນຳທ່ຽວ ຢ່າງປອດໄພ;
7. ໄດ້ຮັບຄ່າບໍລິການຈາກລູກຄ້າ ຢ່າງຖືກຕ້ອງ ແລະ ເປັນທຳ;
8. ສະເໜີພະນັກງານເຂົ້າຝຶກອົບຮົມການນຳທ່ຽວ, ຂໍບັດນຳທ່ຽວ, ສະເໜີປົດປ່ອຍພະນັກງານນຳທ່ຽວອອກ

ຈາກບໍລິສັດ ຫຼື ຫົວໜ່ວຍທຸລະກິດຂອງຕົນ ເມື່ອເຫັນວ່າມີການລະເມີດສັນຍາ ຫຼື ສ້າງຄວາມເສຍຫາຍໃຫ້ກັບທຸລະກິດຂອງຕົນ;

9. ສ້າງຕັ້ງສາຂາ ຫຼື ຫ້ອງການຜູ້ຕາງໜ້າ;
10. ຮ້ອງຂໍຄວາມເປັນທຳ ເມື່ອເຫັນວ່າຕົນຖືກເສຍປະໂຫຍດ;
11. ສິດໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດ ຕາມກົດໝາຍ;
12. ສິດອື່ນໆ ທີ່ບໍ່ຂັດກົດໝາຍ, ລະບຽບການທີ່ກ່ຽວຂ້ອງ ແລະ ຂໍ້ຕົກລົງສະບັບນີ້.

**ຂ. ພັນທະ:**

1. ມີຈັນຍາບັນ, ມີຄວາມບໍລິສຸດສັດຊື່ ຕໍ່ໜ້າທີ່ ແລະ ການບໍລິການ;
2. ນຳສະເໜີລາຍການທ່ອງທ່ຽວ, ກຳນົດລາຄາລາຍການທ່ອງທ່ຽວ ເປັນເອກະລັກຂອງຕົນເອງ ສະເໜີຕໍ່ຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ທີ່ກ່ຽວຂ້ອງ ເພື່ອພິຈາລະນາອະນຸມັດ;
3. ນຳທ່ຽວ ແລະ ຮັບ-ສົ່ງນັກທ່ອງທ່ຽວ ຫຼື ລູກຄ້າ ໄປເຖິງຈຸດໝາຍປາຍທາງ ແລະ ກັບຄືນທີ່ຢູ່ອາໃສເດີມ ບົນພື້ນຖານກຳນົດເວລາຂອງລາຍການທ່ອງທ່ຽວ ແລະ ໜັງສືເດີນທາງທີ່ກ່ຽວຂ້ອງ;
4. ອະນຸລັກ, ປົກປັກຮັກສາສິ່ງແວດລ້ອມທຳມະຊາດ, ວັດທະນະທຳ-ສັງຄົມ ແລະ ສະຖານທີ່ທ່ອງທ່ຽວ;
5. ມີປະກັນໄພບຸກຄົນ, ຊັບສິນທຸລະກິດຂອງຕົນ ແລະ ນັກທ່ອງທ່ຽວ ທີ່ໃຊ້ບໍລິການ;
6. ໃຫ້ການຮ່ວມມືເຈົ້າໜ້າທີ່, ພະນັກງານ, ການຈັດຕັ້ງ ທີ່ກ່ຽວຂ້ອງ ເປັນຢ່າງດີ;
7. ເຂົ້າຮ່ວມກອງປະຊຸມ ຫຼື ກິດຈະກຳ, ເທສະການ ງານຕ່າງໆ ກ່ຽວກັບການທ່ອງທ່ຽວ ຕາມການເຊີນ;
8. ເຂົ້າສະມາຄົມ ຫຼື ອົງການຈັດຕັ້ງທາງສັງຄົມ ກ່ຽວກັບການສົ່ງເສີມການທ່ອງທ່ຽວ;
9. ຖືລະບົບບັນຊີ, ເສຍພາສີ, ອາກອນ, ຄ່າທຳນຽມ ແລະ ຄ່າບໍລິການຕ່າງໆ ຕາມລະບຽບກົດໝາຍ;
10. ປະກອບສ່ວນຊ່ວຍເຫຼືອສັງຄົມ;
11. ເຄົາລົບນັບຖື, ໃຫ້ກຽດ, ຊ່ວຍເຫຼືອລູກຄ້າ ໃນເວລາເຈັບປ່ວຍ ຕາມຄວາມເໝາະສົມ;
12. ເກັບກຳລາຍຊື່, ປະຫວັດ, ທີ່ຢູ່ ແລະ ສະຖິຕິຂອງນັກທ່ອງທ່ຽວ ທີ່ໃຊ້ບໍລິການ ແລະ ສະຫຼຸບລາຍງານສະພາບການຈັດຕັ້ງ, ການເຄື່ອນໄຫວດຳເນີນທຸລະກິດ, ລາຍຮັບ-ລາຍຈ່າຍ ໃຫ້ເຈົ້າໜ້າທີ່ກ່ຽວຂ້ອງ ເປັນປະຈຳ 1 ເດືອນ, 3 ເດືອນ, 6 ເດືອນ ແລະ 1 ປີ;
13. ດຳເນີນທຸລະກິດ ຢ່າງຖືກຕ້ອງຕາມລະບຽບ, ກົດໝາຍ ແລະ ຂໍ້ຕົກລົງສະບັບນີ້;
14. ປະຕິບັດພັນທະອື່ນໆ ທີ່ບໍ່ຂັດກົດໝາຍ, ລະບຽບການ ແລະ ຂໍ້ຕົກລົງສະບັບນີ້.

**ມາດຕາ 15 ສິດ ແລະ ພັນທະ ຂອງບໍລິສັດນຳທ່ຽວ ພາຍໃນປະເທດ**

ບໍລິສັດນຳທ່ຽວພາຍໃນປະເທດ ແມ່ນ ຫົວໜ່ວຍທຸລະກິດ ບໍລິການນຳ ນັກທ່ອງທ່ຽວ ຢູ່ ສປປ ລາວ ທ່ອງທ່ຽວຢູ່ສະຖານທີ່ຕ່າງໆພາຍໃນປະເທດ.

ບໍລິສັດນຳທ່ຽວ ພາຍໃນປະເທດ ມີສິດ ແລະ ພັນທະດຽວກັບ ສິດ ແລະ ພັນທະຂອງບໍລິສັດນຳທ່ຽວລະຫວ່າງປະເທດ ຍົກເວັ້ນ ສິດໃນຂໍ້ 3 ແລະ 4 ຕາມທີ່ໄດ້ກຳນົດຢູ່ໃນມາດຕາ 14 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 16 ສິດ ແລະ ພັນທະ ຂອງບໍລິສັດນຳທ່ຽວ ໃນພື້ນທີ່ສະເພາະໃດໜຶ່ງ**

ບໍລິສັດນຳທ່ຽວໃນພື້ນທີ່ສະເພາະໃດໜຶ່ງ ແມ່ນ ຫົວໜ່ວຍທຸລະກິດ ບໍລິການນຳນັກທ່ອງທ່ຽວພາຍໃນ ຫຼື ນັກທ່ອງທ່ຽວຕ່າງປະເທດ ຢູ່ ສປປ ລາວ ທ່ອງທ່ຽວຢູ່ສະຖານທີ່ທ່ອງທ່ຽວ ໃນພື້ນທີ່ສະເພາະໃດໜຶ່ງ ໃນຂອບເຂດເມືອງ/ນະຄອນ ທີ່ຫົວໜ່ວຍທຸລະກິດຂຶ້ນກັບ ບົນພື້ນຖານຂອງລາຍການທ່ອງທ່ຽວ.

ບໍລິສັດນຳທ່ຽວ ໃນພື້ນທີ່ສະເພາະໃດໜຶ່ງ ມີສິດ ແລະ ພັນທະດຽວກັບສິດ ແລະ ພັນທະຂອງບໍລິສັດນຳທ່ຽວລະຫວ່າງປະເທດ, ຍົກເວັ້ນ ສິດໃນຂໍ້ 2, 3 ແລະ 4 ຕາມທີ່ໄດ້ກຳນົດຢູ່ໃນມາດຕາ 14 ຂອງຂໍ້ຕົກລົງສະບັບນີ້ ແລະ ອະນຸຍາດນຳທ່ຽວຢູ່ສະຖານທີ່ທ່ອງທ່ຽວ ໃນພື້ນທີ່ສະເພາະໃດໜຶ່ງ ພາຍໃນເມືອງ/ນະຄອນ ທີ່ຕົນຂຶ້ນກັບເທົ່ານັ້ນ.

**ມາດຕາ 17 ສິດ ແລະ ພັນທະ ຂອງບໍລິສັດຕົວແທນທຸລະກິດການທ່ອງທ່ຽວ**

ບໍລິສັດຕົວແທນທຸລະກິດການທ່ອງທ່ຽວ ມີ ສິດ ແລະ ພັນທະ ດັ່ງນີ້:

**ກ. ສິດ:**

1. ເປັນຕົວແທນ ຫຼື ນາຍໜ້າ ບໍລິການຂໍ້ມູນຂ່າວສານ ກ່ຽວກັບການເດີນທາງ, ອາຫານ, ສະຖານທີ່ພັກແຮມ, ສະຖານທີ່ທ່ອງທ່ຽວ, ຜະລິດຕະພັນການທ່ອງທ່ຽວ, ງານເທດສະການ, ລາຍການທ່ອງທ່ຽວ ແລະ ກິດຈະກໍາອື່ນໆ ໃນຮູບແບບທຸລະກິດ ເພື່ອການທ່ອງທ່ຽວ;
2. ເປັນຕົວແທນ ຫຼື ນາຍໜ້າ ຈໍາໜ່າຍ ຫຼື ຈອງປີ້ລົດ, ເຮືອ, ເຮືອບິນ ຫຼື ປີ້ພາຫະນະສໍາລັບການເດີນທາງ, ປີ້ເຂົ້າຊົມສະຖານທີ່ທ່ອງທ່ຽວ ແລະ ກິດຈະກໍາ ເພື່ອການທ່ອງທ່ຽວ;
3. ເປັນຕົວແທນ ຫຼື ນາຍໜ້າ ບໍລິການຮັບ-ສົ່ງນັກທ່ອງທ່ຽວ ພາຍໃນ ແລະ/ຫຼື ຕ່າງປະເທດ;
4. ໄດ້ຮັບຄ່າບໍລິການຈາກລູກຄ້າ ຢ່າງຖືກຕ້ອງ ແລະ ເປັນທໍາ;
5. ສ້າງຕັ້ງສາຂາ ຫຼື ຫ້ອງການຜູ້ຕາງໜ້າ;
6. ຮ້ອງຂໍຄວາມເປັນທໍາ ເມື່ອເຫັນວ່າ ຕົນເອງຖືກເສຍປະໂຫຍດ;
7. ສິດໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດ;
8. ສິດອື່ນໆ ທີ່ບໍ່ຂັດກົດໝາຍ, ລະບຽບການທີ່ກ່ຽວຂ້ອງ ແລະ ຂໍ້ຕົກລົງສະບັບນີ້.

**ຂ. ພັນທະ:**

1. ມີຈັນຍາບັນ, ມີຄວາມບໍລິສຸດສັດຊື່ ຕໍ່ໜ້າທີ່ ແລະ ການບໍລິການ;
2. ອະນຸລັກ, ປົກປັກຮັກສາສິ່ງແວດລ້ອມທໍາມະຊາດ ແລະ ວັດທະນະທໍາ-ສັງຄົມ;
3. ມີປະກັນໄພ ບຸກຄົນ ແລະ ຊັບສິນທຸລະກິດຂອງຕົນ;
4. ຮັບ-ສົ່ງລູກຄ້າ ຫຼື ນັກທ່ອງທ່ຽວ ໄປເຖິງຈຸດໝາຍ ປາຍທາງ;
5. ໃຫ້ການຮ່ວມມືເຈົ້າໜ້າທີ່, ພະນັກງານ, ການຈັດຕັ້ງ ທີ່ກ່ຽວຂ້ອງ ເປັນຢ່າງດີ;
6. ເຂົ້າຮ່ວມກອງປະຊຸມ ຫຼື ກິດຈະກໍາ, ເທສະການ ງານຕ່າງໆ ກ່ຽວກັບການທ່ອງທ່ຽວ ຕາມການເຊີນ;
7. ເຂົ້າສະມາຄົມ ຫຼື ອົງການຈັດຕັ້ງທາງສັງຄົມ ກ່ຽວກັບການສົ່ງເສີມການທ່ອງທ່ຽວ;
8. ຖືລະບົບບັນຊີ, ເສຍພາສີ, ອາກອນ, ຄ່າທໍານຽມ ແລະ ຄ່າບໍລິການຕ່າງໆ ຕາມລະບຽບກົດໝາຍ;
9. ປະກອບສ່ວນຊ່ວຍເຫຼືອສັງຄົມ;
10. ເຄົາລົບນັບຖື ໃຫ້ກຽດ ຊ່ວຍເຫຼືອລູກຄ້າທີ່ເຈັບປ່ວຍໃນເວລາໃຊ້ບໍລິການເດີນທາງຕາມຄວາມເໝາະສົມ;
11. ສະຫຼຸບລາຍງານການຈັດຕັ້ງ, ການເຄື່ອນໄຫວດໍາເນີນທຸລະກິດ, ລາຍຮັບ-ລາຍຈ່າຍ ໃຫ້ເຈົ້າໜ້າທີ່ກ່ຽວຂ້ອງ ເປັນປະຈໍາ 1 ເດືອນ, 3 ເດືອນ, 6 ເດືອນ ແລະ 1 ປີ;
12. ດໍາເນີນທຸລະກິດ ຢ່າງຖືກຕ້ອງຕາມກົດໝາຍ, ລະບຽບການ ແລະ ຂໍ້ຕົກລົງສະບັບນີ້;
13. ປະຕິບັດພັນທະອື່ນໆ ທີ່ບໍ່ຂັດກົດໝາຍ, ລະບຽບການ ແລະ ຂໍ້ຕົກລົງສະບັບນີ້.

## ໝວດທີ 3
## ມາດຕະຖານຂອງຫົວໜ່ວຍທຸລະກິດນໍາທ່ຽວ

**ມາດຕາ 18 ມາດຕະຖານຂອງຫົວໜ່ວຍທຸລະກິດນໍາທ່ຽວ**

ມາດຕະຖານຂອງຫົວໜ່ວຍທຸລະກິດນໍາທ່ຽວ ແມ່ນ ການກໍານົດຄຸນລັກສະນະສະເພາະ ຂອງຜະລິດຕະພັນ, ສິນຄ້າ, ການບໍລິການ, ຂະບວນການ ແລະ ອື່ນໆ ທີ່ກ່ຽວຂ້ອງກັບມາດຕະຖານລວມ ແລະ ມາດຕະຖານ ສະເພາະຂອງຫົວໜ່ວຍທຸລະກິດນໍາທ່ຽວ ເພື່ອຕີລາຄາ, ຈັດແບ່ງປະເພດ ແລະ ການຈັດລະດັບຄຸນນະພາບຂອງສິ່ງທີ່ກ່າວມານັ້ນ.

ມາດຕະຖານລວມ ແລະ ມາດຕະຖານສະເພາະ ຂອງຫົວໜ່ວຍທຸລະກິດນໍາທ່ຽວ ແຕ່ລະປະເພດ ຈະໄດ້ກໍານົດໄວ້ຕ່າງຫາກ.

# ພາກທີ IV
# ນັກທ່ອງທ່ຽວ ແລະ ກິດຈະກຳທ່ອງທ່ຽວ
## ໝວດທີ 1
## ຄວາມໝາຍ, ປະເພດ, ຮູບແບບ, ສິດ ແລະ ພັນທະຂອງນັກທ່ອງທ່ຽວ

**ມາດຕາ 19 ນັກທ່ອງທ່ຽວ**

ນັກທ່ອງທ່ຽວ (Tourist) ແມ່ນ ບຸກຄົນທີ່ເດີນທາງຈາກທີ່ຢູ່ອາໄສຂອງຕົນໄປທ້ອງຖິ່ນອື່ນ ຫຼື ປະເທດອື່ນ ເພື່ອການຢ້ຽມຢາມ, ການທ່ຽວຊົມ, ການພັກຜ່ອນ, ການມ່ວນຊື່ນ, ການແລກປ່ຽນວັດທະນະທຳ, ການກິລາ, ການສົ່ງເສີມສຸຂະພາບ, ການສຶກສາຄົ້ນຄວ້າ, ການວາງສະແດງ, ການປະຊຸມ ແລະ ອື່ນໆ ໂດຍບໍ່ມີຈຸດປະສົງອາໄສຢູ່ປະຈຳ, ຊອກເຮັດວຽກ, ປະກອບອາຊີບ ເພື່ອຫາລາຍໄດ້ໃນຮູບແບບຕ່າງໆ.

**ມາດຕາ 20 ປະເພດ ແລະ ຮູບແບບຂອງນັກທ່ອງທ່ຽວ**

ນັກທ່ອງທ່ຽວ ປະກອບດ້ວຍ 2 ປະເພດ ດັ່ງນີ້:

+ **ປະເພດນັກທ່ອງທ່ຽວ ມີ 2 ປະເພດ ຄື:**
1. ນັກທ່ອງທ່ຽວພາຍໃນ;
2. ນັກທ່ອງທ່ຽວຕ່າງປະເທດ.

+ **ຮູບແບບນັກທ່ອງທ່ຽວ ມີ 2 ຮູບແບບ ດັ່ງນີ້:**
1. ນັກທ່ອງທ່ຽວ ທີ່ເດີນທາງທ່ອງທ່ຽວ ດ້ວຍຕົນເອງ;
2. ນັກທ່ອງທ່ຽວ ທີ່ເດີນທາງທ່ອງທ່ຽວ ໂດຍຜ່ານການບໍລິການຂອງບໍລິສັດນຳທ່ຽວ.

**ມາດຕາ 21 ສິດ ແລະ ພັນທະ ຂອງນັກທ່ອງທ່ຽວ**

ນັກທ່ອງທ່ຽວພາຍໃນ ແລະ ຕ່າງປະເທດ ນອກຈາກມີສິດ ແລະ ພັນທະ ຕາມກົດໝາຍ ວ່າດ້ວຍ ການທ່ອງທ່ຽວ ແລ້ວ ຍັງມີສິດ ແລະ ພັນທະ ດັ່ງນີ້:

**ກ. ສິດ:**
1. ເລືອກການເດີນທາງທ່ອງທ່ຽວ ດ້ວຍຕົນເອງ ຫຼື ໃຊ້ບໍລິການຂອງບໍລິສັດນຳທ່ຽວ ຢູ່ ສປປ ລາວ ດ້ວຍຄວາມສະໝັກໃຈ;
2. ສິດໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດຈາກການປະກັນໄພ ຕາມກົດໝາຍ ຂອງ ສປປ ລາວ;
3. ຮ້ອງຂໍຄວາມເປັນທຳ ເມື່ອເຫັນວ່າຕົນຖືກເສັຍປະໂຫຍດ;
4. ສິດໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດ ຕາມກົດໝາຍ;
5. ສິດອື່ນໆ ທີ່ບໍ່ຂັດກົດໝາຍ, ລະບຽບການທີ່ກ່ຽວຂ້ອງ ແລະ ຂໍ້ຕົກລົງສະບັບນີ້.

**ຂ. ພັນທະ:**
1. ເຄົາລົບນັບຖື ຮີດຄອງປະເພນີດີງາມຂອງລາວ, ປະຕິບັດຕາມກົດໝາຍ, ກົດລະບຽບຂອງບໍລິສັດ ນຳທ່ຽວ ແລະ ລະບຽບການອື່ນໆ ທີ່ກ່ຽວຂ້ອງຢ່າງເຂັ້ມງວດ;
2. ເຂົ້າ-ອອກເມືອງຖືກຕ້ອງຕາມກົດໝາຍຂອງ ສປປ ລາວ;
3. ເຄົາລົບນັບຖື ແລະ ໃຫ້ກຽດຕໍ່ພະນັກງານນຳທ່ຽວ, ພະນັກງານຜູ້ໃຫ້ບໍລິການ, ພະນັກງານລັດ, ເຈົ້າໜ້າທີ່ ແລະ ການຈັດຕັ້ງ;
4. ປະຕິບັດພັນທະ ຕໍ່ກອງທຶນການທ່ອງທ່ຽວ ຕາມລະບຽບການ;

# ພາກທີ IV
# ນັກທ່ອງທ່ຽວ ແລະ ກິດຈະກຳທ່ອງທ່ຽວ
## ໝວດທີ 1
## ຄວາມໝາຍ, ປະເພດ, ຮູບແບບ, ສິດ ແລະ ພັນທະຂອງນັກທ່ອງທ່ຽວ

**ມາດຕາ 19 ນັກທ່ອງທ່ຽວ**

ນັກທ່ອງທ່ຽວ (Tourist) ແມ່ນ ບຸກຄົນທີ່ເດີນທາງຈາກທີ່ຢູ່ອາໄສຂອງຕົນໄປທ້ອງຖິ່ນອື່ນ ຫຼື ປະເທດອື່ນ ເພື່ອການຢ້ຽມຢາມ, ການທ່ຽວຊົມ, ການພັກຜ່ອນ, ການມ່ວນຊື່ນ, ການແລກປ່ຽນວັດທະນະທຳ, ການກິລາ, ການສົ່ງເສີມສຸຂະພາບ, ການສຶກສາຄົ້ນຄວ້າ, ການວາງສະແດງ, ການປະຊຸມ ແລະ ອື່ນໆ ໂດຍບໍ່ມີຈຸດປະສົງອາໄສຢູ່ປະຈຳ, ຊອກເຮັດວຽກ, ປະກອບອາຊີບ ເພື່ອຫາລາຍໄດ້ໃນຮູບແບບຕ່າງໆ.

**ມາດຕາ 20 ປະເພດ ແລະ ຮູບແບບຂອງນັກທ່ອງທ່ຽວ**

ນັກທ່ອງທ່ຽວ ປະກອບດ້ວຍ 2 ປະເພດ ດັ່ງນີ້:

\+ **ປະເພດນັກທ່ອງທ່ຽວ ມີ 2 ປະເພດ ຄື:**

1. ນັກທ່ອງທ່ຽວພາຍໃນ;
2. ນັກທ່ອງທ່ຽວຕ່າງປະເທດ.

\+ **ຮູບແບບນັກທ່ອງທ່ຽວ ມີ 2 ຮູບແບບ ດັ່ງນີ້:**

1. ນັກທ່ອງທ່ຽວ ທີ່ເດີນທາງທ່ອງທ່ຽວ ດ້ວຍຕົນເອງ;
2. ນັກທ່ອງທ່ຽວ ທີ່ເດີນທາງທ່ອງທ່ຽວ ໂດຍຜ່ານການບໍລິການຂອງບໍລິສັດນຳທ່ຽວ.

**ມາດຕາ 21 ສິດ ແລະ ພັນທະ ຂອງນັກທ່ອງທ່ຽວ**

ນັກທ່ອງທ່ຽວພາຍໃນ ແລະ ຕ່າງປະເທດ ນອກຈາກມີສິດ ແລະ ພັນທະ ຕາມກົດໝາຍ ວ່າດ້ວຍ ການທ່ອງທ່ຽວ ແລ້ວ ຍັງມີສິດ ແລະ ພັນທະ ດັ່ງນີ້:

**ກ. ສິດ:**

1. ເລືອກການເດີນທາງທ່ອງທ່ຽວ ດ້ວຍຕົນເອງ ຫຼື ໃຊ້ບໍລິການຂອງບໍລິສັດນຳທ່ຽວ ຢູ່ ສປປ ລາວ ດ້ວຍຄວາມສະໝັກໃຈ;
2. ສິດໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດຈາກການປະກັນໄພ ຕາມກົດໝາຍ ຂອງ ສປປ ລາວ;
3. ຮ້ອງຂໍຄວາມເປັນທຳ ເມື່ອເຫັນວ່າຕົນຖືກເສຍປະໂຫຍດ;
4. ສິດໄດ້ຮັບການປົກປ້ອງສິດ ແລະ ຜົນປະໂຫຍດ ຕາມກົດໝາຍ;
5. ສິດອື່ນໆ ທີ່ບໍ່ຂັດກົດໝາຍ, ລະບຽບການທີ່ກ່ຽວຂ້ອງ ແລະ ຂໍ້ຕົກລົງສະບັບນີ້.

**ຂ. ພັນທະ:**

1. ເຄົາລົບນັບຖື ຮີດຄອງປະເພນີດີງາມຂອງລາວ, ປະຕິບັດຕາມກົດໝາຍ, ກົດລະບຽບຂອງບໍລິສັດ ນຳທ່ຽວ ແລະ ລະບຽບການອື່ນໆ ທີ່ກ່ຽວຂ້ອງຢ່າງເຂັ້ມງວດ;
2. ເຂົ້າ-ອອກເມືອງຖືກຕ້ອງຕາມກົດໝາຍຂອງ ສປປ ລາວ;
3. ເຄົາລົບນັບຖື ແລະ ໃຫ້ກຽດຕໍ່ພະນັກງານນຳທ່ຽວ, ພະນັກງານຜູ້ໃຫ້ບໍລິການ, ພະນັກງານລັດ, ເຈົ້າໜ້າທີ່ ແລະ ການຈັດຕັ້ງ;
4. ປະຕິບັດພັນທະ ຕໍ່ກອງທຶນການທ່ອງທ່ຽວ ຕາມລະບຽບການ;

5. ປະຕິບັດຕາມກຳນົດເວລາຂອງລາຍການທ່ອງທ່ຽວ ແລະ ຄຳແນະນຳ ຂອງພະນັກງານນຳທ່ຽວ ຫຼື ເຈົ້າໜ້າທີ່ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ;
6. ປົກປັກຮັກສາຄວາມສະອາດ, ສິ່ງແວດລ້ອມ, ສະຖານທີ່ທ່ອງທ່ຽວ ແລະ ອື່ນໆ ທີ່ກ່ຽວຂ້ອງ;
7. ຕ້ອງມີປະກັນໄພການເດີນທາງພາຍໃນ ຫຼື ຕ່າງປະເທດ ສຳລັບນັກທ່ອງທ່ຽວທີ່ຜ່ານການບໍລິການຂອງບໍລິສັດນຳທ່ຽວ;
8. ລາຍງານ ແລະ ໃຫ້ການຮ່ວມມືເປັນຢ່າງດີ ຕໍ່ເຈົ້າໜ້າທີ່ ເມື່ອພົບບັນຫາ ຫຼື ປະກົດການຫຍໍ້ທໍ້ຕ່າງໆ ທີ່ເປັນໄພຕໍ່ສັງຄົມ;
9. ປະຕິບັດພັນທະອື່ນໆ ທີ່ບໍ່ຂັດກົດໝາຍ, ລະບຽບການ ແລະ ຂໍ້ຕົກລົງສະບັບນີ້.

## ໝວດທີ 2
## ກິດຈະກຳ, ປະເພດ ແລະ ຮູບແບບກິດຈະກຳທ່ອງທ່ຽວ

**ມາດຕາ 22 ກິດຈະກຳທ່ອງທ່ຽວ**

ກິດຈະກຳທ່ອງທ່ຽວ ແມ່ນ ການຈັດຕັ້ງ ແລະ ການເຄື່ອນໄຫວດຳເນີນການໃດໜຶ່ງ ຫຼື ທັງໝົດ ກ່ຽວກັບການທ່ອງທ່ຽວ.

**ມາດຕາ 23 ປະເພດກິດຈະກຳທ່ອງທ່ຽວ**

ກິດຈະກຳທ່ອງທ່ຽວ ປະກອບມີ 3 ປະເພດ ຄື:
1. ກິດຈະກຳທ່ອງທ່ຽວທາງບົກ;
2. ກິດຈະກຳທ່ອງທ່ຽວທາງນ້ຳ;
3. ກິດຈະກຳທ່ອງທ່ຽວທາງອາກາດ.

ສຳລັບກິດຈະກຳທ່ອງທ່ຽວທັງ 3 ປະເພດ ຈະມີລະບຽບການກຳນົດໄວ້ຕ່າງຫາກ.

**ມາດຕາ 24 ຮູບແບບກິດຈະກຳທ່ອງທ່ຽວ**

ກິດຈະກຳທ່ອງທ່ຽວ ປະກອບມີ 2 ຮູບແບບ ຄື:
1. ກິດຈະກຳທ່ອງທ່ຽວ ທີ່ຕິດພັນກັບສະຖານທີ່ທ່ອງທ່ຽວທຳມະຊາດ;
2. ກິດຈະກຳທ່ອງທ່ຽວ ທີ່ຕິດພັນກັບສະຖານທີ່ທ່ອງທ່ຽວທີ່ມະນຸດສ້າງຂຶ້ນ.

## ໝວດທີ 3
## ການທ່ອງທ່ຽວຄາລະວານ

**ມາດຕາ 25 ການທ່ອງທ່ຽວຄາລະວານ**

ແມ່ນ ການຈັດຕັ້ງ ແລະ ການເຄື່ອນໄຫວດຳເນີນການໃດໜຶ່ງ ຫຼື ທັງໝົດ ກ່ຽວກັບກິດຈະກຳການ ທ່ອງທ່ຽວ ຂອງບໍລິສັດ ນຳທ່ຽວໃດໜຶ່ງ ຫຼື ຫຼາຍບໍລິສັດຮ່ວມກັນບໍລິການກິດຈະກຳການທ່ອງທ່ຽວ ຕາມລາຍການທ່ອງທ່ຽວ ເພື່ອໂຄສະນາດຶງດູດນັກທ່ອງທ່ຽວພາຍໃນ ແລະ/ຫຼື ຕ່າງປະເທດ ເຂົ້າຮ່ວມເດີນທາງທ່ອງທ່ຽວເປັນຂະບວນ ທີ່ມີນັກທ່ອງທ່ຽວເປັນຈຳນວນຫຼາຍ ເຂົ້າຮ່ວມເດີນທາງໄປ ພ້ອມກັນເປັນ ກຸ່ມ ຫຼື ຄະນະ ໂດຍມີການວາງແຜນ, ມີການຈັດຕັ້ງ ແລະ ເຈົ້າໜ້າທີ່ຮັກສາຄວາມປອດໄພຢ່າງເປັນລະບົບ ເພື່ອການທ່ອງທ່ຽວ ດ້ວຍການນຳໃຊ້ຮ່າງກາຍ ຫຼື ການຂັບຂີ່ຍານພາຫະນະ ເຊັ່ນ: ເຮືອບິນ, ລົດ, ເຮືອ, ແພ, ສັດ ແລະ ອື່ນໆ.

ສຳລັບລະບຽບການກ່ຽວກັບການທ່ອງທ່ຽວຄາລະວານ ຈະໄດ້ກຳນົດໄວ້ຕ່າງຫາກ.

## ພາກທີ V
## ການດຳເນີນທຸລະກິດ, ການໂຈະ, ການຍົກເລີກ, ການສິ້ນສຸດ ທຸລະກິດນຳທ່ຽວ
## ໝວດທີ 1
## ການດຳເນີນທຸລະກິດນຳທ່ຽວ

**ມາດຕາ 26 ການສະເໜີດຳເນີນທຸລະກິດນຳທ່ຽວ**

ບຸກຄົນ ແລະ ນິຕິບຸກຄົນ ທີ່ມີຈຸດປະສົງດຳເນີນທຸລະກິດນຳທ່ຽວ ໃຫ້ປະຕິບັດຕາມມາດຕາ 29 ຂອງຂໍ້ຕົກລົງສະບັບນີ້ ແລະ ແຈ້ງຂຶ້ນທະບຽນວິສາຫະກິດຢູ່ຂະແໜງອຸດສາຫະກຳ ແລະ ການຄ້າ ທີ່ກ່ຽວຂ້ອງ, ພາຍຫຼັງຂຶ້ນທະບຽນວິສາຫະກິດຖືກຕ້ອງແລ້ວ ໃຫ້ປະກອບເອກະສານຕາມມາດຕາ 30 ຂໍ້ ກ ຂອງຂໍ້ຕົກລົງສະບັບນີ້ ແລະ ຍື່ນຄຳຮ້ອງຢູ່ຫ້ອງການຄະນະກຳມະການປະສານງານ ການບໍລິການລົງທຶນປະຕູດຽວ ຂອງຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ບ່ອນທີ່ຢູ່ໃກ້ທີ່ສຸດ ແລະ ສະດວກທີ່ສຸດສຳລັບຜູ້ຍື່ນຄຳຮ້ອງ.

**ມາດຕາ 27 ກຳນົດເວລາພິຈາລະນາຄຳຮ້ອງດຳເນີນທຸລະກິດນຳທ່ຽວ**

ພາຍຫຼັງຄະນະກຳມະການປະສານງານ ການບໍລິການລົງທຶນປະຕູດຽວ ຂອງຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໄດ້ຮັບຄຳຮ້ອງດຳເນີນທຸລະກິດ ຫຼື ຄຳຮ້ອງຂໍສືບຕໍ່ດຳເນີນທຸລະກິດແລ້ວ ຕ້ອງສົ່ງໃຫ້ຂະແໜງທ່ອງທ່ຽວທີ່ກ່ຽວຂ້ອງ ພາຍໃນ 2 ວັນລັດຖະການ, ເມື່ອຂະແໜງການດັ່ງກ່າວໄດ້ຮັບຄຳຮ້ອງແລ້ວ ຕ້ອງປະສານກັບພາກສ່ວນກ່ຽວຂ້ອງ ຄົ້ນຄວ້າພິຈາລະນາກວດກາຄວາມຖືກຕ້ອງດ້ານເອກະສານ ແລະ ສະຖານທີ່ຕົວຈິງ ແລະ ອອກໃບອະນຸຍາດດຳເນີນທຸລະກິດໃຫ້ເຈົ້າຂອງທຸລະກິດ ພ້ອມທັງແຈ້ງຄ່າທຳນຽມ ແລະ ຄ່າບໍລິການ ໃຫ້ຜູ້ຍື່ນຄຳຮ້ອງຮັບຊາບ ພາຍໃນ 7 ວັນລັດຖະການ ນັບແຕ່ມື້ທີ່ຜູ້ຂໍສະເໜີດຳເນີນທຸລະກິດ ປະກອບເອກະສານຄົບຖ້ວນສົມບູນ,ຖືກຕ້ອງ ແລະ ຜ່ານການກວດກາຄວາມພ້ອມດ້ານຕ່າງໆ ຫຼື ຕອບປະຕິເສດ ດ້ວຍເຫດຜົນທາງດ້ານກົດໝາຍ ໃນກໍລະນີບໍ່ເຫັນດີ.

**ມາດຕາ 28 ເງື່ອນໄຂການດຳເນີນທຸລະກິດນຳທ່ຽວ**

ບຸກຄົນ ແລະ ນິຕິບຸກຄົນ ທີ່ຈະດຳເນີນທຸລະກິດນຳທ່ຽວ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ເປັນບຸກຄົນ ຫຼື ນິຕິບຸກຄົນ ທີ່ໄດ້ຂຶ້ນທະບຽນວິສາຫະກິດ ຢ່າງຖືກຕ້ອງຕາມກົດໝາຍ ຂອງ ສປປ ລາວ;
2. ມີສຳນັກງານ/ຫ້ອງການ, ວັດຖຸອຸປະກອນ ທີ່ຖືກຕ້ອງຕາມລະບຽບການ ແລະ ມາດຕະຖານ;
3. ມີພະນັກງານນຳທ່ຽວປະຈຳ ຫຼື ບໍ່ປະຈຳ
4. ມີລາຍການທ່ອງທ່ຽວ ແລະ ລາຄາລາຍການທ່ອງທ່ຽວ
5. ມີໃບອະນຸຍາດດຳເນີນທຸລະກິດນຳທ່ຽວ;
6. ຕ້ອງມີທຶນຈົດທະບຽນຕາມເງື່ອນໄຂທີ່ໄດ້ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້;
7. ເປີດບັນຊີເງິນຝາກຢູ່ທະນາຄານທຸລະກິດ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງກຳນົດ;
8. ສຳລັບບຸກຄົນ ຫຼື ນິຕິບຸກຄົນຕ່າງປະເທດ ນອກຈາກປະຕິບັດຕາມຂໍ້ 1, 2, 3,4 ແລະ ຂໍ້ 5 ຂອງມາດຕານີ້ແລ້ວ ຕ້ອງມີເງິນຄ້ຳປະກັນ (Deposit Money) ຝາກຢູ່ທະນາຄານທຸລະກິດເປັນສະກຸນເງິນກີບ ບໍ່ຫຼຸດ 30% (ສາມສິບສ່ວນຮ້ອຍ) ຂອງທຶນຈົດທະບຽນທັງໝົດ.

**ມາດຕາ 29 ການປະກອບເອກະສານຂໍສະເໜີດຳເນີນທຸລະກິດນຳທ່ຽວ**

**ກ. ເອກະສານ ຂໍສະເໜີດຳເນີນທຸລະກິດນຳທ່ຽວ ມີ ດັ່ງນີ້:**

1. ໃບຄຳຮ້ອງຂໍອະນຸຍາດດຳເນີນທຸລະກິດ 1 ໃບ;
2. ຂໍ້ມູນທີ່ຈຳເປັນຕາມແບບຟອມຂອງກົມຄຸ້ມຄອງທຸລະກິດການທ່ອງທ່ຽວ;
3. ສຳເນົາ ໃບທະບຽນວິສາຫະກິດ 1 ໃບ;
4. ສຳເນົາ ສຳນວນຄຳຮ້ອງຂໍຂຶ້ນທະບຽນວິສາຫະກິດ 1 ຊຸດ;

5. ຮູບຖ່າຍເຈົ້າຂອງວິສາຫະກິດ ຂະໜາດ 3x4 ຊມ 2 ໃບ ບໍ່ເກີນ 3 ເດືອນ

**ຂ. ເອກະສານ ຄຳຮ້ອງສະເໜີສືບຕໍ່ດຳເນີນທຸລະກິດນຳທ່ຽວ ມີ ດັ່ງນີ້:**

1. ໃບຄຳຮ້ອງ ສະເໜີສືບຕໍ່ດຳເນີນທຸລະກິດ 1 ໃບ;
2. ສຳເນົາ ໃບອະນຸຍາດດຳເນີນທຸລະກິດ/ໃບຢັ້ງຢືນສືບຕໍ່ດຳເນີນທຸລະກິດປີຫຼ້າສຸດ;
3. ໃບເສຍອາກອນ ຫຼື ໃບຢັ້ງຢືນເສຍອາກອນ ປະຈຳປີຫຼ້າສຸດ.
4. ຕ້ອງຍື່ນຄຳຮ້ອງຂໍສືບຕໍ່ດຳເນີນທຸລະກິດ ກ່ອນ 30 ວັນ ທີ່ໃບຢັ້ງຢືນສືບຕໍ່ດຳເນີນທຸລະກິດ ຈະໝົດອາຍຸ.

**ມາດຕາ 30 ການສ້າງຕັ້ງ, ໂຈະ, ຖອນ ສາຂາ/ຫ້ອງການຜູ້ຕາງໜ້າທຸລະກິດນຳທ່ຽວ**

ຫົວໜ່ວຍທຸລະກິດນຳທ່ຽວ ຫຼື ບໍລິສັດນຳທ່ຽວແຕ່ລະປະເພດ ແລະ ບໍລິສັດຕົວແທນທຸລະກິດການທ່ອງທ່ຽວ ທີ່ມີຈຸດປະສົງສ້າງຕັ້ງສາ ຫຼື ເປີດສາຂາ/ຫ້ອງການຜູ້ຕາງໜ້າ ໃຫ້ປະກອບຄຳຮ້ອງ ແລະ ສຳເນົາໃບອະນຸຍາດດຳເນີນທຸລະກິດນຳທ່ຽວ ທີ່ກ່ຽວຂ້ອງ ຍື່ນຕໍ່ຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວທີ່ກ່ຽວຂ້ອງ ຄົ້ນຄວ້າພິຈາລະນາຕາມ ມາດຕາ 29 ຍົກເວັ້ນ ຂໍ້ 2,3,4 ແລະ ຂໍ້ 5 ຂອງຂໍ້ຕົກລົງສະບັບນີ້.

ການສ້າງຕັ້ງ, ໂຈະ, ຖອນສາຂາ, ຫ້ອງການຜູ້ຕາງໜ້າ ບໍ່ມີໃບອະນຸຍາດດຳເນີນທຸລະກິດ, ມີພຽງແຕ່ໃບຢັ້ງຢືນການເປັນ ສາຂາ/ຫ້ອງຜູ້ຕາງໜ້າ ແລະ ບໍ່ມີຖານະເປັນນິຕິບຸກຄົນ, ບໍ່ສາມາດດຳເນີນທຸລະກິດເປັນເອກະລາດ ມີພຽງແຕ່ເຄື່ອນໄຫວຕາມການມອບໝາຍຂອງບໍລິສັດແມ່ ທີ່ກ່ຽວຂ້ອງເທົ່ານັ້ນ.

ການສ້າງຕັ້ງ, ໂຈະ, ຖອນ ສາຂາ ໃຫ້ປະຕິບັດຕາມກົດໝາຍ ວ່າດ້ວຍວິສາຫະກິດ ແລະ ລະບຽບການທີ່ກ່ຽວຂ້ອງ.

ສຳລັບການສ້າງຕັ້ງ, ໂຈະ, ຖອນ ຫ້ອງການຜູ້ຕາງໜ້າ ໃຫ້ປະຕິບັດຕາມກົດໝາຍ ວ່າດ້ວຍການສົ່ງເສີມການລົງທຶນ ແລະ ລະບຽບການທີ່ກ່ຽວຂ້ອງ.

## ໝວດທີ 2
## ໃບອະນຸຍາດ ແລະ ການນຳໃຊ້ ໃບອະນຸຍາດດຳເນີນທຸລະກິດນຳທ່ຽວ

**ມາດຕາ 31 ໃບອະນຸຍາດດຳເນີນທຸລະກິດນຳທ່ຽວ**

ໃບອະນຸຍາດດຳເນີນທຸລະກິດ ແມ່ນ ໃບຢັ້ງຢືນຈາກພາກລັດ ອະນຸຍາດໃຫ້ຫົວໜ່ວຍທຸລະກິດໃດໜຶ່ງເພື່ອຢັ້ງຢືນການດຳເນີນທຸລະກິດຂອງບຸກຄົນ ຫຼື ນິຕິບຸກຄົນ ໃນການດຳເນີນກິດຈະການທຸລະກິດ ທີ່ມີຄວາມສ່ຽງຕໍ່ສິ່ງແວດລ້ອມ, ເສດຖະກິດ, ວັດທະນະທຳ-ສັງຄົມ, ຄວາມສະຫງົບປອດໄພ ແລະ ຄວາມໝັ້ນຄົງຂອງຊາດ.

**ມາດຕາ 32 ການນຳໃຊ້ໃບອະນຸຍາດດຳເນີນທຸລະກິດນຳທ່ຽວ**

ໃບອະນຸຍາດດຳເນີນທຸລະກິດ ເປັນກຳມະສິດຂອງຜູ້ທີ່ໄດ້ຮັບອະນຸຍາດໂດຍກົງຈາກລັດ ແລະ ມີອາຍຸການນຳໃຊ້ຕະຫຼອດໄປ, ແຕ່ທຸກໆ 2 ປີ ຕ້ອງໄດ້ຮັບໃບຢັ້ງຢືນສືບຕໍ່ດຳເນີນທຸລະກິດ ໂດຍນັບຈາກວັນທີຢັ້ງຢືນຄັ້ງຫຼ້າສຸດເປັນຕົ້ນໄປ ຕາມຂັ້ນຕອນ ແລະ ກຳນົດເວລາ ທີ່ກຳນົດຢູ່ໃນມາດຕາ 26, 27, 28 ແລະ 29 ຂໍ້ ຂ ຂອງຂໍ້ຕົກລົງສະບັບນີ້.

ໃນກໍລະນີທີ່ມີການລະເມີດກົດໝາຍ ຫຼື ຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການຕາມກົດໝາຍ ທີ່ກ່ຽວຂ້ອງ ແລະ ຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 33 ການຢັ້ງຢືນການສືບຕໍ່ດຳເນີນທຸລະກິດນຳທ່ຽວ**

ກົມຄຸ້ມຄອງທຸລະກິດການທ່ອງທ່ຽວ/ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ແຂວງ/ນະຄອນຫຼວງ, ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງ/ນະຄອນ ທີ່ກ່ຽວຂ້ອງ ຕ້ອງປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຕິດຕາມກວດກາ, ອຳນວຍຄວາມສະດວກ ແລະ ແຈ້ງໃຫ້ຫົວໜ່ວຍທຸລະກິດນຳ

ທ່ຽວ ທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນຮັບຊາບ ເພື່ອປະກອບເອກະສານ ແລະ ຍື່ນຄໍາຮ້ອງຂໍສືບຕໍ່ດໍາເນີນທຸລະກິດເມື່ອເຖິງກໍານົດເວລາ ໂດຍປະຕິບັດຕາມມາດຕາ 27, 28 ແລະ ຂໍ້ ຂ ມາດຕາ 30 ຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 34 ບ່ອນຍື່ນຄໍາຮ້ອງສືບຕໍ່ດໍາເນີນທຸລະກິດນໍາທ່ຽວ**

ຫົວໜ່ວຍທຸລະກິດທີ່ມີຈຸດປະສົງຍື່ນຄໍາຮ້ອງຂໍສືບຕໍ່ດໍາເນີນທຸລະກິດຂອງຕົນ ໃຫ້ປະຕິບັດຕາມມາດຕາ 27 ຂອງຂໍ້ຕົກລົງສະບັບນີ້ ເພື່ອຢັ້ງຢືນການສືບຕໍ່ດໍາເນີນທຸລະກິດຂອງຕົນ.

## ໝວດທີ 3
## ການກໍານົດທຶນ ແລະ ທຶນຈົດທະບຽນທຸລະກິດນໍາທ່ຽວ

**ມາດຕາ 35 ການກໍານົດທຶນຈົດທະບຽນທຸລະກິດນໍາທ່ຽວ**

ການກໍານົດທຶນຈົດທະບຽນ ແມ່ນ ເພື່ອກໍານົດຕົວຊີ້ວັດການຈັດປະເພດຂອງຫົວໜ່ວຍທຸລະກິດນໍາທ່ຽວ.

ທຶນຈົດທະບຽນ ຕ້ອງມີຈິງ ໂດຍການຢັ້ງຢືນຂອງທະນາຄານ ຢູ່ ສປປ ລາວ ຕາມກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

ຫົວໜ່ວຍທຸລະກິດນໍາທ່ຽວ ແຕ່ລະປະເພດ ສາມາດຍົກລະດັບຖານະນິຕິບຸກຄົນຂອງຕົນ ຈາກປະເພດໜຶ່ງໄປອີກປະເພດໜຶ່ງ ຕາມຄວາມສາມາດ ແລະ ເງື່ອນໄຂມາດຕະຖານຂອງຂໍ້ຕົກລົງສະບັບນີ້.

**ມາດຕາ 36 ທຶນຈົດທະບຽນ**

ຫົວໜ່ວຍທຸລະກິດນໍາທ່ຽວ ແຕ່ລະປະເພດ ທັງພາຍໃນ ແລະ ຕ່າງປະເທດ ຕ້ອງປະກອບທຶນຈົດທະບຽນ ດັ່ງນີ້:

1. ບໍລິສັດນໍາທ່ຽວ ລະຫວ່າງປະເທດ ຕ້ອງມີທຶນຈົດທະບຽນ 1,500,000,000 ກີບ (ໜຶ່ງພັນຫ້າຮ້ອຍລ້ານກີບ) ຂຶ້ນໄປ;
2. ບໍລິສັດຕົວແທນທຸລະກິດການທ່ອງທ່ຽວ ຕ້ອງມີທຶນຈົດທະບຽນ 1,000,000,000 ກີບ (ໜຶ່ງພັນລ້ານກີບ) ຂຶ້ນໄປ;
3. ບໍລິສັດນໍາທ່ຽວພາຍໃນປະເທດ ຕ້ອງມີທຶນຈົດທະບຽນ 500,000,000 ກີບ (ຫ້າຮ້ອຍລ້ານກີບ) ຂຶ້ນໄປ.
4. ບໍລິສັດນໍາທ່ຽວໃນພື້ນທີ່ສະເພາະໃດໜຶ່ງ ຕ້ອງມີທຶນຈົດທະບຽນ 100,000,000 ກີບ (ໜຶ່ງຮ້ອຍລ້ານກີບ) ຂຶ້ນໄປ.

## ໝວດທີ 4
## ການໂຈະ, ການຍົກເລີກ ແລະ ສິ້ນສຸດ ການດໍາເນີນທຸລະກິດນໍາທ່ຽວ

**ມາດຕາ 37 ການໂຈະການດໍາເນີນທຸລະກິດ**

ທຸລະກິດນໍາທ່ຽວ ຈະຖືກໂຈະການເຄື່ອນໄຫວໃນກໍລະນີໃດໜຶ່ງ ດັ່ງນີ້:

1. ຕາມການສະເໜີຂອງເຈົ້າຂອງທຸລະກິດ ຫຼື ຜູ້ກ່ຽວ;
2. ຕາມການສະເໜີຂອງຂະແໜງການທີ່ກ່ຽວຂ້ອງ ຫຼື ຜູ້ຖືກຜົນກະທົບ ຍ້ອນບໍ່ປະຕິບັດຕາມເປົ້າໝາຍຂອງການດໍາເນີນທຸລະກິດ ຫຼື ການເຄື່ອນໄຫວ ທີ່ໄດ້ຮັບການອະນຸຍາດ, ສ້າງຜົນເສຍຫາຍໃຫ້ເສດຖະກິດ-ສັງຄົມ, ສິ່ງແວດລ້ອມ ແລະ/ຫຼື ການດໍາເນີນທຸລະກິດບໍ່ໄປຕາມສັນຍາ ຫຼື ລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
3. ບໍ່ດໍາເນີນທຸລະກິດຕໍ່ເນື່ອງເປັນເວລາ 1 ປີ ໂດຍບໍ່ແຈ້ງເຫດຜົນ ນັບແຕ່ມື້ໄດ້ຮັບອະນຸຍາດເປັນຕົ້ນໄປ.

4. ຕາມຄໍາຕັດສິນຂອງສານ.

**ມາດຕາ 38 ຂັ້ນຕອນການໂຈະ**

ການໂຈະ ຕາມການສະເໜີຂອງເຈົ້າຂອງທຸລະກິດ ຫຼື ຜູ້ກ່ຽວ ແມ່ນ ກົມກອງ, ພະແນກການ, ຫ້ອງການ ທີ່ອອກອະນຸຍາດດໍາເນີນທຸລະກິດ ຕ້ອງປະສານສົມທົບກັບເຈົ້າໜ້າທີ່ຕໍາຫຼວດ ແລະ ຂະແໜງການທີ່ກ່ຽວຂ້ອງ ເພື່ອກວດກາປະເມີນຜົນ ແລະ ພິສູດຫຼັກຖານ ກ່ອນການພິຈາລະນາອະນຸຍາດໃຫ້ໂຈະ ແລະ ແຈ້ງເຕືອນເປັນລາຍລັກອັກສອນ ໂດຍມີກໍານົດເວລາ ເພື່ອໃຫ້ຜູ້ດໍາເນີນທຸລະກິດ ຫຼື ບຸກຄົນທີ່ກ່ຽວຂ້ອງ ແກ້ໄຂ ຫຼື ປັບປຸງໃຫ້ຖືກຕ້ອງ.

ໃນກໍລະນີທີ່ບໍ່ສາມາດແກ້ໄຂໄດ້ຕາມກໍານົດເວລາ ທີ່ໄດ້ຕົກລົງກັນ, ການດໍາເນີນທຸລະກິດ ຫຼື ການເຄື່ອນໄຫວ ປະກອບອາຊີບດັ່ງກ່າວ ຈະຖືກສັ່ງໃຫ້ໂຈະພາຍໃນ 3 ວັນລັດຖະການ ນັບແຕ່ມື້ແຈ້ງເຕືອນເປັນລາຍລັກອັກສອນເປັນຕົ້ນໄປ ບົນພື້ນຖານການເຫັນດີຂອງລັດຖະມົນຕີ ກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ.

ສໍາລັບການໂຈະ ໂດຍການບໍ່ດໍາເນີນທຸລະກິດຕໍ່ເນື່ອງເປັນເວລາ 1 ປີ ແມ່ນ ກົມກອງ, ພະແນກການ, ຫ້ອງການ ທີ່ອອກອະນຸຍາດດໍາເນີນທຸລະກິດ ຈະເປັນຜູ້ດໍາເນີນການ ຕາມຂັ້ນຕອນ ແລະ ກໍານົດເວລາດຽວກັນກັບການໂຈະ ຕາມການສະເໜີຂອງເຈົ້າຂອງທຸລະກິດ ຫຼື ຜູ້ກ່ຽວ ດັ່ງທີ່ກ່າວຢູ່ຂ້າງເທິງນີ້.

ການໂຈະ ຕາມການສະເໜີຂອງຂະແໜງການທີ່ກ່ຽວຂ້ອງ ຫຼື ຜູ້ຖືກຜົນກະທົບ ແມ່ນ ກົມກອງ, ພະແນກການ, ຫ້ອງການທີ່ ອອກອະນຸຍາດດໍາເນີນທຸລະກິດ ຈະເປັນຜູ້ດໍາເນີນການ ຕາມຂັ້ນຕອນ ແລະ ກໍານົດເວລາດຽວກັນກັບການໂຈະ ຕາມການສະເໜີຂອງເຈົ້າຂອງທຸລະກິດ ຫຼື ຜູ້ກ່ຽວ ດັ່ງທີ່ກ່າວຢູ່ຂ້າງເທິງນີ້.

ການໂຈະ ຕາມຄໍາຕັດສິນຂອງສານ ແມ່ນ ກົມກອງ, ພະແນກການ, ຫ້ອງການທີ່ອະນຸຍາດ ແລະ ອອກໃບທະບຽນວິສາຫະກິດ, ເຈົ້າໜ້າທີ່ຕໍາຫຼວດ ແລະ ຂະແໜງການທີ່ກ່ຽວຂ້ອງປະສານສົມທົບກັນ ຈັດຕັ້ງປະຕິບັດຕາມຄໍາຕັດສິນຂອງສານ.

**ມາດຕາ 39 ການຍົກເລີກການດໍາເນີນທຸລະກິດ**

ຫົວໜ່ວຍທຸລະກິດນໍາທ່ຽວ ຈະຖືກຍົກເລີກ ຫຼື ສິ້ນສຸດສະພາບໃນກໍລະນີ ດັ່ງນີ້:

1. ຕາມການສະເໜີຂອງຜູ້ດໍາເນີນທຸລະກິດ ຫຼື ຄູ່ສັນຍາຝ່າຍໃດຝ່າຍໜຶ່ງ ຫຼື ຂອງຜູ້ກ່ຽວ ໃນກໍລະນີທີ່ມີການລະເມີດຂໍ້ຜູກພັນຂອງອີກຝ່າຍໃດຝ່າຍໜຶ່ງ ຕາມທີ່ໄດ້ກໍານົດໄວ້ໃນສັນຍາ ຫຼື ກົດໝາຍ, ລະບຽບການທີ່ກ່ຽວຂ້ອງ;
2. ບໍ່ສາມາດແກ້ໄຂຕາມທີ່ລະບຸຢູ່ໃນມາດຕາ 38, 39 ຂອງຂໍ້ຕົກລົງສະບັບນີ້;
3. ບໍ່ເສຍພາສີ, ອາກອນ ແລະ ພັນທະການເງິນອື່ນ ຕາມກົດໝາຍ, ລະບຽບການທີ່ກ່ຽວຂ້ອງ ແລະ ຂໍ້ຕົກລົງສະບັບນີ້;
4. ບໍ່ດໍາເນີນທຸລະກິດຕໍ່ເນື່ອງເປັນເວລາ 2 ປີ ໂດຍບໍ່ແຈ້ງເຫດຜົນ ນັບແຕ່ມື້ໄດ້ຮັບອະນຸຍາດເປັນຕົ້ນໄປ.
5. ຕາມຄໍາຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດ ໃຫ້ຍົກເລີກການດໍາເນີນທຸລະກິດ;
6. ທຸລະກິດລົ້ມລະລາຍ ຕາມກົດໝາຍ.

ການຍົກເລີກການດໍາເນີນທຸລະກິດ, ການສິ້ນສະພາບ ຈະບໍ່ສົ່ງຜົນໃຫ້ຜູ້ດໍາເນີນທຸລະກິດ ຫຼື ຜູ້ກະທໍາຜິດ ພົ້ນຈາກພັນທະ ແລະ ໜີ້ສິນທີ່ມີຕໍ່ບຸກຄົນ, ນິຕິບຸກຄົນ ແລະ ຕໍ່ພາກລັດ.

**ມາດຕາ 40 ຂັ້ນຕອນການຍົກເລີກ**

ຂັ້ນຕອນການຍົກເລີກການດໍາເນີນທຸລະກິດ ມີດັ່ງນີ້:

**1.** ກົມກອງ, ພະແນກການ, ຫ້ອງການ ທີ່ອອກອະນຸຍາດ ຈະເປັນຜູ້ອອກໜັງສືແຈ້ງຍົກເລີກການດໍາເນີນທຸລະກິດ ຫຼື ການເຄື່ອນໄຫວຂອງບຸກຄົນ ບົນພື້ນຖານການປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ແລະ ການຕົກລົງເຫັນດີຂອງລັດຖະມົນຕີ ກະຊວງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ;

**2.** ໃຫ້ປະຕິບັດພັນທະຕໍ່ລັດ ແລະ ໃຊ້ແທນໜີ້ສິນໃຫ້ແກ່ເຈົ້າໜີ້ ຢ່າງຄົບຖ້ວນ.

**ມາດຕາ 41 ການສິ້ນສຸດການດຳເນີນທຸລະກິດ**

ການດຳເນີນທຸລະກິດ ຈະສິ້ນສຸດລົງ ໃນກໍລະນີ ດັ່ງນີ້:

1. ຕາມການສະເໜີຂອງເຈົ້າຂອງທຸລະກິດ ຫຼື ການສະເໜີຂອງຜູ້ກ່ຽວ;
2. ຖືກຖອນໃບອະນຸຍາດດຳເນີນທຸລະກິດ ຕາມກົດໝາຍ, ລະບຽບການທີ່ກ່ຽວຂ້ອງ ແລະ ຂໍ້ຕົກລົງສະບັບນີ້;
3. ຕາມຄຳຕັດສິນຂອງສານ.

## ພາກທີ VI
## ຂໍ້ຫ້າມ ແລະ ການແກ້ໄຂຂໍ້ຂັດແຍ່ງ
## ໝວດທີ 1
## ຂໍ້ຫ້າມ

**ມາດຕາ 42 ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ທີ່ກ່ຽວຂ້ອງກັບທຸລະກິດນຳທ່ຽວ ມີພຶດຕິກຳ ດັ່ງນີ້:

1. ຕ້ານແນວທາງນະໂຍບາຍຂອງພັກ, ກົດໝາຍ ແລະ ລະບຽບການຂອງລັດ;
2. ດຳເນີນທຸລະກິດ ຫຼື ເຄື່ອນໄຫວ ທີ່ກົດໝາຍ ແລະ ລະບຽບການເກືອດຫ້າມ;
3. ຂັດຂວາງການພັດທະນາ ແລະ ການດຳເນີນທຸລະກິດ ໃນຂົງເຂດທີ່ລັດມີນະໂຍບາຍ;
4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ;
5. ສູບຢາໃນຊຸມຊົນແອອັດ ແລະ ສະຖານທີ່ຫ້າມສູບຢາ;
6. ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງພາຍໃນ ແລະ ຕ່າງປະເທດ ທີ່ບໍ່ແມ່ນບໍລິສັດນຳທ່ຽວ ດຳເນີນກິດຈະກຳທ່ອງທ່ຽວ ຫຼື ນຳທ່ຽວ ໃນຮູບແບບຕ່າງໆ ໂດຍບໍ່ໄດ້ຮັບອະນຸຍາດຈາກຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ທີ່ກ່ຽວຂ້ອງ.

**ມາດຕາ 43 ຂໍ້ຫ້າມສຳລັບພະນັກງານລັດ**

ຫ້າມພະນັກງານລັດ ມີ ພຶດຕິກຳກ່ຽວກັບທຸລະກິດນຳທ່ຽວ ດັ່ງນີ້:

1. ສວຍໃຊ້ອຳນາດ, ໜ້າທີ່, ຕຳແໜ່ງ ເພື່ອຫາຜົນປະໂຫຍດສ່ວນຕົວ ຈາກທຸລະກິດນຳທ່ຽວ;
2. ສົມຮູ້ຮ່ວມຄິດ ຫຼື ອຳນວຍຄວາມສະດວກໃຫ້ທຸລະກິດ, ຜູ້ປະກອບກິດຈະການທຸລະກິດນຳທ່ຽວ, ນັກທ່ອງທ່ຽວ, ຜູ້ມີສ່ວນກ່ຽວຂ້ອງເພື່ອໃຫ້ໄດ້ມາຊຶ່ງຜົນປະໂຫຍດທີ່ຂັດກັບກົດໝາຍ, ລະບຽບການ ແລະ ຂໍ້ຕົກລົງສະບັບນີ້;
3. ຮັບສິນບົນຈາກຜູ້ດຳເນີນທຸລະກິດ, ນັກທ່ອງທ່ຽວ ຫຼື ຜູ້ມີສ່ວນກ່ຽວຂ້ອງກັບທຸ ລະກິດນຳທ່ຽວ;
4. ເປີດເຜີຍຄວາມລັບຂອງຊາດ, ຂອງລັດ ແລະ ຂອງຜູ້ດຳເນີນທຸລະກິດນຳທ່ຽວ;
5. ຂັດຂວາງ, ແກ່ຍາວເວລາ, ກົດໜ່ວງການພິຈາລະນາເອກະສານຕ່າງໆ ຂອງຜູ້ດຳເນີນທຸລະກິດ, ໂດຍຂາດເຫດຜົນທາງດ້ານກົດໝາຍ ແລະ ລະບຽບການ;
6. ແຕ່ງກາຍ, ນຸ່ງຖືບໍ່ສຸພາບ, ໂປ້ເປືອຍ, ສະແດງ, ໂຊພາບໂປ້ເປືອຍ ລາມົກອານາຈານ;
7. ສູບຢາໃນຊຸມຊົນແອອັດ ແລະ ສະຖານທີ່ຫ້າມສູບຢາ;
8. ມີພຶດຕິກຳອື່ນ ທີ່ຂັດຕໍ່ກົດໝາຍ ແລະ ລະບຽບການ.

**ມາດຕາ 44 ຂໍ້ຫ້າມສຳລັບຜູ້ດຳເນີນທຸລະກິດ**

ຫ້າມຜູ້ດຳເນີນທຸລະກິດນຳທ່ຽວ ມີພຶດຕິກຳ ດັ່ງນີ້:

1. ໃຫ້ສິນບົນແກ່ເຈົ້າໜ້າທີ່, ພະນັກງານ ແລະ ບຸກຄົນ ທີ່ຮັບຜິດຊອບວຽກງານໂດຍກົງ ຫຼື ວຽກງານທີ່ກ່ຽວຂ້ອງກັບທຸລະກິດນຳທ່ຽວ;

2. ສົມຮູ້ຮ່ວມຄິດກັບເຈົ້າໜ້າທີ່, ພະນັກງານລັດ ແລະ ບຸກຄົນ ເພື່ອຫາຜົນປະໂຫຍດ ທີ່ຂັດຕໍ່ກົດໝາຍ ແລະ ລະບຽບການ;
3. ດໍາເນີນທຸລະກິດໂດຍບໍ່ໄດ້ຮັບອະນຸຍາດ ຫຼື ນໍາໃຊ້ໃບອະນຸຍາດດໍາເນີນທຸລະກິດ ຫຼື ເອກະສານທາງການ ໃນທາງທີ່ຂັດຕໍ່ກົດໝາຍ ແລະ ລະບຽບການ;
4. ບໍລິການນໍາທ່ຽວ ໃນສະຖານທີ່ຕ້ອງຫ້າມ, ບໍ່ປະຕິບັດຕາມສັນຍາ ແລະ ລາຍການທ່ອງທ່ຽວ;
5. ນໍາພານັກທ່ອງທ່ຽວ ລັກລອບ ຫຼື ຫຼົບໜີເຂົ້າ-ອອກເມືອງ, ຂາຍແຮງງານ, ຈັດຫາອາຊີບ, ຈັດຫາງານ ເພື່ອຫາລາຍໄດ້ໃຫ້ນັກທ່ອງທ່ຽວ ໃນຮູບແບບຕ່າງໆ;
6. ໂຄສະນາປິດເບືອນຄວາມຈິງ, ນໍາໃຊ້ ຫຼື ບໍລິການນໍາທ່ຽວ ລາຍການທ່ອງທ່ຽວ ທີ່ບໍ່ໄດ້ຮັບອະນຸຍາດຈາກທາງການ;
7. ບໍ່ປະຕິບັດເວລາ ຕາມສັນຍາ ແລະ ລາຍການທ່ອງທ່ຽວ;
8. ໂຄສະນາ, ຂາຍ ຫຼື ບໍລິການ ກິດຈະກໍາທ່ອງທ່ຽວໂດຍບໍ່ໄດ້ຮັບອະນຸຍາດ;
9. ນໍາໃຊ້ສະຖານທີ່ເຮັດວຽກ, ຫ້ອງການ, ສະຖານທີ່ທ່ອງທ່ຽວ, ບໍລິການ ແລະ ອື່ນໆ ໃຫ້ນັກທ່ອງທ່ຽວ ຫຼື ບຸກຄົນທົ່ວໄປ ເປັນບ່ອນພັກອາໄສກໍ່ການຮ້າຍ, ເກັບ, ຈໍາໜ່າຍ, ຄ້າຂາຍ, ບໍລິການ, ເສບ, ມົ້ວສຸມສິ່ງເສບຕິດ, ການພະນັນ, ຂອງເຖື່ອນ, ໂສເພນີ, ຄ້າມະນຸດ, ອາວຸດ, ແຮງງານເຖື່ອນ, ແຮງງານເດັກອາຍຸບໍ່ເຖິງກະສຽນ ແລະ ສິ່ງຜິດກົດໝາຍ ທຸກຊະນິດ;
1. ສູບຢາໃນຊຸມຊົນແອອັດ ແລະ ສະຖານທີ່ຫ້າມສູບຢາ;
10. ສ້າງບັນຫາທີ່ສົ່ງຜົນກະທົບຕໍ່ສິ່ງແວດລ້ອມ, ຄວາມສະຫງົບ, ຄວາມປອດໄພ, ສຽງເນືອງນັນ, ມົນລະພິດທາງອາກາດ, ນໍ້າເປື້ອນ, ກິ່ນເໝັນ, ກີດຂວາງການສັນຈອນຕາມຖະໜົນສາທາລະນະ, ກໍ່ຄວາມວຸ້ນວາຍ ອາລະວາດຕີກັນ;
11. ແຕ່ງກາຍ, ນຸ່ງຖືບໍ່ສຸພາບ, ໂປ້ເປືອຍ, ສະແດງ, ໂຊພາບໂປ້ເປືອຍ ລາມົກອານາຈານ;
12. ບໍລິການບໍ່ໄດ້ຄຸນນະພາບ, ສໍ້ໂກງລາຄາ, ໃສ່ຮ້າຍປ້າຍສີບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງ, ພັກ, ລັດ, ຂັດຂວາງການປະຕິບັດໜ້າທີ່ຂອງການຈັດຕັ້ງລັດ, ເຈົ້າໜ້າທີ່ ຫຼື ພະນັກງານລັດ ແລະ ມີພຶດຕິກໍາອື່ນ ທີ່ຂັດຕໍ່ກົດໝາຍ ແລະ ລະບຽບການ.

### ມາດຕາ 45 ຂໍ້ຫ້າມສໍາລັບນັກທ່ອງທ່ຽວ

ຫ້າມນັກທ່ອງທ່ຽວ ມີພຶດຕິກໍາ ດັ່ງນີ້:

1. ຂັດຂວາງ, ຕໍ່ຕ້ານ, ລະເມີດລະບຽບການ ຂໍ້ຫ້າມຕ່າງໆ, ບໍ່ໃຫ້ການຮ່ວມມືທີ່ດີ ຕໍ່ເຈົ້າໜ້າທີ່, ພະນັກ ງານ, ພະນັກງານນໍາທ່ຽວ ແລະ ການຈັດຕັ້ງທີ່ກ່ຽວຂ້ອງ;
2. ຄ້າມະນຸດ, ບໍລິການ ຫຼື ຄ້າຂາຍປະເວນີ, ໂສເພນີ, ສິ່ງເສບຕິດ ແລະ ສິ່ງຜິດກົດໝາຍ;
3. 2ແຕ່ງກາຍບໍ່ສຸພາບ, ນຸ່ງຖືໂປ້ເປືອຍ, ມີພຶດຕິກໍາ ແລະ ເວົ້າຈາບໍ່ສຸພາບ;
4. ບໍ່ປະຕິບັດເວລາຕາມສັນຍາ ຫຼື ລາຍການທ່ອງທ່ຽວ;
5. ດື່ມສິ່ງມຶນເມົາ ຫຼື ຢູ່ໃນສະພາບມຶນເມົາໃນເວລາເຮັດກິດຈະກໍາທ່ອງທ່ຽວ ທີ່ມີຄວາມສ່ຽງ, ທ້າທາຍ ຫຼື ຜະຈົນໄພ;
6. ສູບຢາໃນຊຸມຊົນແອອັດ ແລະ ສະຖານທີ່ຫ້າມສູບຢາ;
7. ຄ້າຂາຍ, ຈໍາໜ່າຍ, ຄອບຄອງ ສິ່ງເສບຕິດ ແລະ ສິ່ງຜິດກົດໝາຍ;
8. ມີພຶດຕິກໍາອື່ນໆ ທີ່ຂັດຕໍ່ລະບຽບກົດໝາຍ.

## ໝວດທີ 2
## ການແກ້ໄຂ ຂໍ້ຂັດແຍ່ງ

**ມາດຕາ 46 ຮູບການແກ້ໄຂຂໍ້ຂັດແຍ່ງ**

ຮູບການແກ້ໄຂຂໍ້ຂັດແຍ່ງ ມີດັ່ງນີ້:

1. ການແກ້ໄຂ ດ້ວຍການປະນີປະນອມ;
2. ການແກ້ໄຂ ທາງບໍລິຫານ;
3. ການແກ້ໄຂໂດຍ ສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຢູ່ ສປປ ລາວ;
4. ການຮ້ອງຟ້ອງຕໍ່ສານປະຊາຊົນ.

**ມາດຕາ 47 ການແກ້ໄຂດ້ວຍການປະນີປະນອມ**

ໃນກໍລະນີ ທີ່ມີຂໍ້ຂັດແຍ່ງເກີດຂຶ້ນໃນສະຖານເບົາ ຄູ່ກໍລະນີຕ້ອງດໍາເນີນການແກ້ໄຂຂໍ້ຂັດແຍ່ງ ໂດຍສັນຕິວິທີ, ປະນີປະນອມ ຫຼື ໂດຍຜ່ານຄົນກາງ ເພື່ອໃຫ້ຕ່າງຝ່າຍ ຕ່າງໄດ້ຮັບຜົນປະໂຫຍດ ທີ່ສົມເຫດສົມຜົນ ແລະ ເປັນທໍາ.

**ມາດຕາ 48 ການແກ້ໄຂທາງດ້ານບໍລິຫານ**

ໃນກໍລະນີ ເກີດຂໍ້ຂັດແຍ່ງໃນທາງບໍລິຫານ ຄູ່ກໍລະນີ ຫຼື ຝ່າຍໃດຝ່າຍໜຶ່ງ ຕ້ອງສະເໜີຂໍ້ຂັດແຍ່ງຕໍ່ກົມຄຸ້ມຄອງທຸລະກິດການທ່ອງທ່ຽວ/ພະແນກຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວແຂວງ/ນະຄອນຫຼວງ, ຫ້ອງການຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວເມືອງ/ນະຄອນ ທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າ ພິຈາລະນາແກ້ໄຂຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 49 ການແກ້ໄຂໂດຍ ສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຢູ່ ສປປ ລາວ**

ໃນກໍລະນີ ເກີດຂໍ້ຂັດແຍ່ງທາງດ້ານເສດຖະກິດ ຄູ່ກໍລະນີ ສາມາດຮ້ອງຂໍຕໍ່ສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດຂອງ ສປປ ລາວ ເພື່ອພິຈາລະນາແກ້ໄຂຕາມຂະບວນການຂອງສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 50 ການຮ້ອງຟ້ອງຕໍ່ສານ ຢູ່ ສປປ ລາວ**

ໃນກໍລະນີ ເກີດຂໍ້ຂັດແຍ່ງທີ່ບໍ່ສາມາດແກ້ໄຂໂດຍການປະນີປະນອມ, ການແກ້ໄຂທາງບໍລິຫານ ແລະ ການແກ້ໄຂໂດຍສູນແກ້ໄຂຂໍ້ຂັດແຍ່ງທາງດ້ານເສດຖະກິດ ຄູ່ກໍລະນີຝ່າຍໃດຝ່າຍໜຶ່ງ ສາມາດຮ້ອງຟ້ອງຕໍ່ສານປະຊາຊົນຕາມກົດໝາຍຂອງ ສປປ ລາວ, ເມື່ອມີຄໍາຕັດສິນຂອງສານປະຊາຊົນ ທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ ໃຫ້ມີຜົນສັກສິດບັງຄັບປະຕິບັດ ຕໍ່ຄູ່ກໍລະນີ.

## ພາກທີ VII
## ການຈັດຕັ້ງປະຕິບັດ ຄ່າທໍານຽມ,
## ຄ່າບໍລິການ ແລະ ການຄຸ້ມຄອງທຸລະກິດນໍາທ່ຽວ
## ໝວດທີ 1
## ການຈັດຕັ້ງປະຕິບັດ ຄ່າທໍານຽມ ແລະ ຄ່າບໍລິການ

**ມາດຕາ 51 ການປະຕິບັດຄ່າທໍານຽມ ແລະ ຄ່າບໍລິການ**

ບຸກຄົນ, ນິຕິບຸກຄົນ, ການຈັດຕັ້ງທັງພາຍໃນ ແລະ ຕ່າງປະເທດ ທີ່ດໍາເນີນທຸລະກິດນໍາທ່ຽວ ຢູ່ ສປປ ລາວ ຕ້ອງເສຍຄ່າທໍານຽມ ແລະ ຄ່າບໍລິການ ຕາມລັດຖະບັນຍັດຂອງປະທານປະເທດວ່າດ້ວຍ ຄ່າທໍານຽມ ແລະ ຄ່າບໍລິການ ທີ່ປະກາດໃຊ້ໃນແຕ່ລະໄລຍະ.

**ມາດຕາ 52 ການເກັບຄ່າທຳນຽມ ແລະ ຄ່າບໍລິການ**

ພະນັກງານການເງິນ ຜູ້ທີ່ເກັບຄ່າທຳນຽມ ແລະ ຄ່າບໍລິການທຸລະກິດນຳທ່ຽວ, ໃນຂອບທົ່ວປະເທດ ຕ້ອງໄດ້ຮັບອະນຸຍາດຈາກຂະແໜງການເງິນເປັນລາຍລັກອັກສອນ. ການເກັບຄ່າ ຕ້ອງຈົດຮັບ, ຈົດຈ່າຍພ້ອມທັງອອກໃບເກັບເງິນໃຫ້ຜູ້ຈ່າຍເງິນ ຢ່າງຖືກຕ້ອງຕາມກົດໝາຍ ແລະ ລະບຽບການ.

ຜູ້ຈ່າຍເງິນ ຕ້ອງທວງເອົາໃບເກັບເງິນ ຫຼື ໃບບິນຮັບເງິນຂອງຂະແໜງການເງິນ ຢ່າງຖືກຕ້ອງ ເພື່ອເປັນຫຼັກຖານຢັ້ງຢືນການຈ່າຍເງິນ.

**ມາດຕາ 53 ການເກັບຮັກສາ ລາຍຮັບຄ່າທຳນຽມ, ຄ່າບໍລິການ ແລະ ຄ່າປັບໃໝ**

ລາຍຮັບທັງໝົດທີ່ເກັບໄດ້ຈາກຄ່າທຳນຽມ, ຄ່າບໍລິການ ແລະ ຄ່າປັບໃໝ ໃຫ້ປະຕິບັດຕາມລັດຖະບັນຍັດຂອງປະທານປະເທດ ວ່າດ້ວຍ ຄ່າທຳນຽມ ແລະ ຄ່າບໍລິການ ແລະ ລະບຽບການເງິນທີ່ກ່ຽວຂ້ອງ ວາງອອກໃນແຕ່ລະໄລຍະ.

## ໝວດທີ 2
## ການຄຸ້ມຄອງທຸລະກິດນຳທ່ຽວ

**ມາດຕາ 54 ອົງການຄຸ້ມຄອງ**

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນຜູ້ຄຸ້ມຄອງວຽກງານທຸລະກິດນຳທ່ຽວ ຢ່າງລວມສູນ ແລະ ເປັນເອກະພາບ ໃນຂອບເຂດທົ່ວປະເທດ ໂດຍມອບໃຫ້ກົມຄຸ້ມຄອງທຸລະກິດການທ່ອງທ່ຽວ ເປັນເສນາທິການໃຫ້ກະຊວງ ແລະ ເປັນເຈົ້າການປະສານສົມທົບກັບຂະແໜງອຸດສາຫະກຳ ແລະ ການຄ້າ, ຂະແໜງການເງິນ, ຂະແໜງປ້ອງກັນຄວາມສະຫງົບ, ຂະແໜງໂຍທາທິການ ແລະ ຂົນສົ່ງ, ຂະແໜງການອື່ນ ແລະ ອົງ ການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ໃນການຄຸ້ມຄອງ ແລະ ຕິດຕາມກວດກາວຽກງານທຸລະກິດນຳທ່ຽວ ຢູ່ ສປປ ລາວ.

**ມາດຕາ 55 ສິດ ແລະ ໜ້າທີ່ ຂອງຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ**

ໃນການຄຸ້ມຄອງວຽກງານທຸລະກິດນຳທ່ຽວ ຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ນອກຈາກປະຕິບັດສິດ ແລະ ໜ້າທີ່ ຕາມກົດໝາຍ ແລ້ວຍັງມີສິດ ແລະ ໜ້າທີ່ ດັ່ງນີ້:

**ກ. ສິດ ແລະ ໜ້າທີ່ຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ:**

1. ຄົ້ນຄວ້າ, ສ້າງ, ປັບປຸງ, ໂຄສະນາເຜີຍແຜ່ ແຜນຍຸດທະສາດ, ນະໂຍບາຍ, ກົດໝາຍ, ລະບຽບການກ່ຽວກັບການສົ່ງເສີມ ແລະ ຄຸ້ມຄອງວຽກງານທຸລະກິດນຳທ່ຽວ ຢູ່ ສປປ ລາວ;
2. ຄົ້ນຄວ້າການສ້າງລະບົບເອເລັກໂຕຣນິກ ສົ່ງເສີມ ແລະ ຄຸ້ມຄອງທຸລະກິດນຳທ່ຽວໃຫ້ມີຄວາມສະດວກວ່ອງໄວ ເຊື່ອມໂຍງກັບຂະແໜງການ ແລະ ທ້ອງຖິ່ນ, ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ/ນະຄອນຫຼວງ, ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວເມືອງ/ນະຄອນ, ເຂດເສດຖະກິດສະເພາະ ແລະ ຫ້ອງການຄະນະກຳມະການປະສານງານ ການບໍລິການລົງທຶນປະຕູດຽວຂອງຂະແໜງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນ ເພື່ອເຊື່ອມໂຍງດ້ານຂໍ້ມູນຂ່າວສານ, ການຄົ້ນຄວ້າພິຈາລະນາການລົງທຶນ, ການຂຶ້ນທະບຽນວິສາຫະກິດ, ການອະນຸຍາດດຳເນີນທຸລະກິດ, ການສືບຕໍ່ດຳເນີນທຸລະກິດ ແລະ ວຽກງານຄຸ້ມຄອງຕິດຕາມກວດກາຫົວ ໜ່ວຍທຸລະກິດ ໃນຂອບເຂດທົ່ວປະເທດ;
3. ໂຄສະນາ ແລະ ປະກາດໃຊ້ບັນດາແບບພິມ ຫຼື ແບບຟອມ ຄຳຮ້ອງຂໍອະນຸຍາດດຳເນີນທຸລະກິດ, ໃບອະນຸຍາດດຳເນີນທຸລະກິດ, ໃບຢັ້ງຢືນຕ່າງໆ, ເງື່ອນໄຂມາດຕະຖານ, ຂັ້ນຕອນ ແລະ ຂະບວນການອະນຸຍາດດຳເນີນທຸລະກິດນຳທ່ຽວ ຢູ່ ສປປ ລາວ;
4. ເປັນໃຈກາງປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າ, ເຈລະຈາສັນຍາ ແລະ ການຮັບ

ຂອງໂຄງການ ກ່ຽວກັບການດຳເນີນທຸລະກິດນຳທ່ຽວ ທີ່ມີຄວາມສ່ຽງສູງ ແລະ ມີຄວາມລະອຽດອ່ອນຕໍ່ສະພາບແວດລ້ອມທາງດ້ານເສດຖະກິດ, ວັນທະນະທຳ-ສັງຄົມ ແລະ ຄວາມໝັ້ນຄົງຂອງຊາດ;

5. ຄົ້ນຄວ້າ, ພິຈາລະນາ, ອອກອະນຸຍາດ ໃບອະນຸຍາດດຳເນີນທຸລະກິດ, ໃບຢັ້ງຢືນການສືບຕໍ່ດຳເນີນທຸລະກິດ , ໃບຢັ້ງຢືນ ແລະ ໃບອະນຸຍາດຕ່າງໆ ຫຼື ເອກະສານຕ່າງໆ ກ່ຽວກັບ ການດຳເນີນທຸລະກິດນຳທ່ຽວລະຫວ່າງປະເທດ, ບໍລິສັດຕົວແທນທຸລະກິດການທ່ອງທ່ຽວ ໃຫ້ມີຄວາມສະດວກ, ວ່ອງໄວ, ໂປ່ງໃສ, ຍຸຕິທຳ ແລະ ຖືກຕ້ອງ;
6. ຄົ້ນຄວ້າ, ພິຈາລະນາ ແລະ ນຳສະເໜີຂັ້ນເທິງ ເພື່ອຍ້ອງຍໍຊົມເຊີຍ ຫຼື ປະຕິບັດມາດຕະການ ຕໍ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ມີຜົນງານດີເດັ່ນ ຫຼື ລະເມີດໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້;
7. ຄົ້ນຄວ້າ, ພິຈາລະນາ, ປັບປຸງແປງ, ຕັກເຕືອນ, ປັບໃໝ, ສັ່ງໂຈະ, ສັ່ງຖອນ, ແລະ ສັ່ງຍຸບເລີກ ໃບອະນຸຍາດດຳເນີນທຸລະກິດ, ໃບຢັ້ງຢືນການສືບຕໍ່ດຳເນີນທຸລະກິດ, ໃບຢັ້ງຢືນອື່ນໆ, ເອກະ ສານທາງການ, ໂຄງການ, ກິດຈະການການດຳເນີນທຸລະກິດນຳທ່ຽວລະຫວ່າງປະເທດ, ບໍລິສັດຕົວແທນທຸລະກິດການທ່ອງທ່ຽວ ໃນທົ່ວປະເທດທີ່ເຄື່ອນໄຫວບໍ່ຖືກຕ້ອງ, ບໍ່ປະຕິບັດຕາມເປົ້າໝາຍການດຳເນີນທຸລະກິດ ຫຼື ດຳເນີນທຸລະກິດ ບໍ່ໄປຕາມສັນຍາ ຫຼື ລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
8. ສ້າງ ແລະ ຄຸ້ມຄອງລະບົບຖານຂໍ້ມູນຂ່າວສານ, ສະໜອງຂໍ້ມູນຂ່າວສານ ກ່ຽວກັບນະໂຍບາຍສົ່ງເສີມການດຳເນີນທຸລະກິດ ເພື່ອດຶງດູດນັກລົງທຶນ, ນັກທ່ອງທ່ຽວພາຍໃນ ແລະ ຕ່າງປະເທດ;
9. ຕິດຕາມກວດກາການຈັດຕັ້ງປະຕິບັດກົດໝາຍ ແລະ ນິຕິກຳລຸ່ມກົດໝາຍ ຂອງຫົວໜ່ວຍທຸລະກິດນຳທ່ຽວຢູ່ ສປປ ລາວ;
10. ຊຸກຍູ້, ສົ່ງເສີມ ແລະ ປະສານສົມທົບກັບບັນດາຂະແໜງການອື່ນ ແລະ ທ້ອງຖິ່ນ ທີ່ກ່ຽວຂ້ອງໃນການປະເມີນການຈັດຕັ້ງປະຕິບັດໂຄງການ, ກິດຈະການ, ກິດຈະກຳທ່ອງທ່ຽວ ແລະ ການແກ້ໄຂບັນຫາຕ່າງໆ ທີ່ເກີດຂຶ້ນກັບບັນດາໂຄງການ, ກິດຈະການ, ກິດຈະກຳທ່ອງທ່ຽວ ແລະ ການດຳເນີນທຸລະກິດ ໃນຂອບເຂດທົ່ວປະເທດ ລວມທັງການຄຸ້ມຄອງຜູ້ປະກອບກິດຈະການທຸລະກິດນຳທ່ຽວ, ບໍລິສັດຕົວແທນທຸລະກິດການທ່ອງທ່ຽວ ໃນການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
11. ຊີ້ນຳ ແລະ ອຳນວຍຄວາມສະດວກ ໃນການບໍລິການ, ການດຳເນີນທຸລະກິດ ໃຫ້ເຂົ້າສູ່ລະບົບປະຕູດຽວ ເພື່ອຄວາມສະດວກ, ວ່ອງໄວ, ໂປ່ງໃສ, ຍຸຕິທຳ, ຖືກຕ້ອງ, ມີປະສິດທິພາບ ແລະ ປະສິດທິຜົນ;
12. ຝຶກອົບຮົມ, ສ້າງ, ບຳລຸງ, ຍົກລະດັບພະນັກງານ ກ່ຽວກັບວຽກງານສົ່ງເສີມ, ຄຸ້ມຄອງ ແລະ ການບໍລິການດ້ານການນຳທ່ຽວ, ການເດີນທາງ, ອາຫານ, ການພັກແຮມໃຫ້ມີຄວາມສະດວກ, ມີຄຸນນະພາບ, ມາດຕະຖານ, ສະອາດ ແລະ ປອດໄພ;
13. ພົວພັນ ແລະ ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານສົ່ງເສີມ ແລະ ຄຸ້ມຄອງທຸລະກິດດ້ານການທ່ອງທ່ຽວ;
14. ສະຫຼຸບ ແລະ ລາຍງານວຽກງານ ກ່ຽວກັບການສົ່ງເສີມ ແລະ ຄຸ້ມຄອງທຸລະກິດນຳທ່ຽວ ຕໍ່ລັດຖະບານ ຢ່າງເປັນປົກກະຕິ;
15. ກຳນົດເງື່ອນໄຂ, ມາດຕະຖານ ແລະ ມາດຕະການ ກ່ຽວກັບ ທຸລະກິດນຳທ່ຽວ-ໃນຂອບເຂດທົ່ວປະເທດ;
16. ຜັນຂະຫຍາຍແນວທາງນະໂຍບາຍ, ກົດໝາຍ ແລະ ລະບຽບການຂອງລັດ ກ່ຽວກັບວຽກງານທຸລະກິດນຳທ່ຽວ;
17. ສ້າງແຜນການ, ແຜນງານ, ໂຄງການ ແລະ ການຈັດຕັ້ງປະຕິບັດ ຕິດພັນກັບສິ່ງແວດລ້ອມ, ເສດຖະກິດ, ວັດທະນະທຳ-ສັງຄົມ, ຄວາມສະຫງົບປອດໄພ ແລະ ຄວາມໝັ້ນຄົງຂອງຊາດດ້ານການນຳທ່ຽວ ຢ່າງຮອບດ້ານ;
18. ໂຄສະນາສຶກສາອົບຮົມ ດ້ານນະໂນບາຍ, ແຜນຍຸດທະສາດ, ແຜນການ, ໂຄງການ, ກົດໝາຍ ແລະ ລະບຽບການກ່ຽວກັບວຽກງານ ທຸລະກິດນຳທ່ຽວ;
19. ຄົ້ນຄວ້າ, ເຜີຍແຜ່, ແນະນຳວຽກງານທຸລະກິດນຳທ່ຽວໃຫ້ດຳເນີນໄປຢ່າງມີປະສິດທິພາບ, ມີປະສິດທິຜົນ ຕິດພັນກັບວຽກງານໂຄສະນາເຜີຍແຜ່ສິລະປະ, ວັດທະນະທຳ ແລະ ປະເພນີທີ່ດີງາມຂອງຊາດ;

20. ປະສານສົມທົບກັບ ຂະແໜງໂຍທາທິການ ແລະ ຂົນສົ່ງ, ຂະແໜງປ້ອງກັນຄວາມສະຫງົບ ແລະ ຂະແໜງການອື່ນ ທີ່ກ່ຽວຂ້ອງ ຕິດຕາມກວດກາການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫົວໜ່ວຍທຸລະກິດ ນໍາທ່ຽວໃນຂອບເຂດທົ່ວປະເທດ ເພື່ອຮັບປະກັນຄວາມສະຫງົບ ແລະ ປອດໄພ;
21. ຝຶກອົບຮົມສ້າງຄວາມເຂັ້ມແຂງ,ຍົກລະດັບປັບປຸງ,ຄວາມຮູ້ຄວາມສາມາດຂອງບຸກຄະລາກອນໃນຂົງເຂດວຽກງານທຸລະກິດນໍາທ່ຽວ ທີ່ຂຶ້ນກັບຄວາມຮັບຜິດຊອບ ຂອງຕົນ ໃຫ້ມີທັກສະ, ຄວາມຮູ້, ຄວາມສາມາດໃນແຕ່ລະດ້ານ ໃຫ້ມີຄຸນນະພາບ ແລະ ມາດຕະຖານ;
22. ຊີ້ນໍາ-ນໍາພາ ວຽກງານຄຸ້ມຄອງທຸລະກິດນໍາທ່ຽວ ວຽກງານທີ່ຕິດພັນກັບທຸລະກິດດັ່ງກ່າວ ໃຫ້ພະແນກຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວແຂວງ/ນະຄອນຫຼວງ, ຫ້ອງການຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວເມືອງ/ນະຄອນ ຢູ່ຂັ້ນທ້ອງຖິ່ນ ຢ່າງໃກ້ຊິດ;
23. ປະເມີນ, ຢັ້ງຢືນມາດຕະຖານທຸລະກິດນໍາທ່ຽວ;
24. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຄົ້ນຄວ້າ, ພິຈາລະນາ, ຕັກເຕືອນ, ປັບໃໝ, ສັ່ງໂຈະ, ສັ່ງຖອນ, ສັ່ງຍຸບເລີກ ຫົວໜ່ວຍທຸລະກິດນໍາທ່ຽວ, ບໍລິສັດຕົວແທນທຸລະກິດການທ່ອງທ່ຽວ ທົ່ວປະເທດ ທີ່ເຄື່ອນໄຫວບໍ່ຖືກຕ້ອງ;
25. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**໒. ສິດ ແລະ ໜ້າທີ່ຂອງພະແນກຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ແຂວງ/ນະຄອນຫຼວງ:**

1. ຈັດຕັ້ງຜັນຂະຫຍາຍໂຄສະນາ, ເຜີຍແຜ່ແຜນຍຸດທະສາດ, ນະໂຍບາຍ, ກົດໝາຍ ແລະ ລະບຽບການກ່ຽວກັບທຸລະກິດນໍາທ່ຽວ ຕາມການແບ່ງຂັ້ນຄຸ້ມຄອງ ແລະ ການມອບ ໝາຍຂອງຂັ້ນເທິງ;
2. ຄຸ້ມຄອງລະບົບຖານຂໍ້ມູນຂ່າວສານ, ສະໜອງຂໍ້ມູນຂ່າວສານ ກ່ຽວກັບນະໂຍບາຍສົ່ງເສີມ ແລະ ຄຸ້ມຄອງບໍລິສັດນໍາທ່ຽວພາຍໃນປະເທດ ເພື່ອດຶງດູດນັກລົງທຶນ ແລະ ນັກທ່ອງທ່ຽວ ຕາມຄວາມຮັບຜິດຊອບ ຢູ່ໃນຂັ້ນທ້ອງຖິ່ນຂອງຕົນ;
3. ເປັນໃຈກາງປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ເພື່ອຄົ້ນຄວ້າ, ເຈລະຈາສັນຍາຂອງໂຄງການ ແລະ ຕາງໜ້າໃຫ້ແຂວງ ລົງນາມໃນສັນຍາ ເອກະສານກ່ຽວຂ້ອງກັບໂຄງການ ວຽກງານ ບໍລິສັດນໍາທ່ຽວພາຍໃນປະເທດ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ;
4. ຊຸກຍູ້, ຕິດຕາມກວດກາ, ປະເມີນຜົນການຈັດຕັ້ງປະຕິບັດໂຄງການ, ກິດຈະການ ລວມທັງ ການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບ ການສົ່ງເສີມ ແລະ ຄຸ້ມຄອງ ບໍລິສັດນໍາທ່ຽວພາຍໃນປະເທດ ຕາມການແບ່ງຂັ້ນຄຸ້ມຄອງ ແລະ ການມອບໝາຍ ຂອງຂັ້ນເທິງ;
5. ປະສານສົມທົບກັບບັນດາຂະແໜງການ ແລະ ທ້ອງຖິ່ນ ໃນການຄຸ້ມຄອງ, ການແກ້ໄຂບັນຫາຕ່າງໆ ປະ ກົດການຫຍໍ້ທໍ້ໃນບັນດາໂຄງການ, ກິດຈະການ ບໍລິສັດນໍາທ່ຽວພາຍໃນປະເທດ ຕາມການແບ່ງຂັ້ນຄຸ້ມຄອງ ແລະ ການມອບໝາຍຂອງຂັ້ນເທິງ;
6. ຄົ້ນຄວ້າ, ພິຈາລະນາ ແລະ ນໍາສະເໜີກົມຄຸ້ມຄອງທຸລະກິດການທ່ອງທ່ຽວ ເພື່ອຍ້ອງຍໍຊົມເຊີຍ ຫຼື ປະຕິບັດມາດຕະການ ຕໍ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ມີຜົນງານດີເດັ່ນ ຫຼື ລະເມີດໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມການແບ່ງຂັ້ນຄຸ້ມຄອງ ແລະ ການມອບໝາຍຂອງຂັ້ນເທິງ;
7. ຄົ້ນຄວ້າ, ພິຈາລະນາ, ອອກອະນຸຍາດ, ໃບອະນຸຍາດດໍາເນີນທຸລະກິດ, ໃບຢັ້ງຢືນການສືບຕໍ່ດໍາເນີນທຸລະກິດ, ໃບຢັ້ງຢືນ ແລະ ໃບອະນຸຍາດຕ່າງໆ ຫຼື ເອກະສານຕ່າງໆ ກ່ຽວກັບ ການດໍາເນີນທຸລະກິດນໍາທ່ຽວພາຍໃນປະເທດ ໃຫ້ມີຄວາມສະດວກ, ວ່ອງໄວ, ໂປ່ງໃສ, ຍຸຕິທໍາ ແລະ ຖືກຕ້ອງ;
8. ຄົ້ນຄວ້າ, ພິຈາລະນາ, ປ່ຽນແປງ, ຕັກເຕືອນ, ປັບໃໝ, ສັ່ງໂຈະ, ສັ່ງຖອນ ແລະ ສັ່ງຍຸບເລີກ ໃບອະນຸຍາດດໍາເນີນທຸລະກິດ, ໃບຢັ້ງຢືນການສືບຕໍ່ດໍາເນີນທຸລະກິດ, ໃບຢັ້ງຢືນອື່ນໆ, ເອກະ ສານທາງການ, ໂຄງການ, ກິດຈະການການດໍາເນີນທຸລະກິດນໍາທ່ຽວພາຍໃນປະເທດ ທີ່ເຄື່ອນໄຫວບໍ່ຖືກຕ້ອງ, ບໍ່ປະຕິບັດຕາມເປົ້າໝາຍການດໍາເນີນທຸລະກິດ ຫຼື ດໍາເນີນທຸລະກິດ ບໍ່ໄປຕາມສັນຍາ ຫຼື ລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຕາມການແບ່ງຂັ້ນຄຸ້ມຄອງ ແລະ ການມອບໝາຍຂອງຂັ້ນເທິງ;

9. ອຳນວຍຄວາມສະດວກ ໃນການດຳເນີນທຸລະກິດຂອງຜູ້ລົງທຶນ ຫຼື ການດຳເນີນການ ການບໍລິການລົງທຶນປະຕູດຽວ ໃຫ້ມີຄວາມສະດວກ, ວ່ອງໄວ, ໂປ່ງໃສ, ຍຸຕິທຳ, ຖືກຕ້ອງ ແລະ ມີປະສິດທິພາບ ແລະ ປະສິດທິຜົນ;
10. ພົວພັນ, ຮ່ວມມືກັບຕ່າງປະເທດ ກ່ຽວກັບວຽກງານສົ່ງເສີມ ແລະ ຄຸ້ມຄອງ ທຸລະກິດນຳທ່ຽວພາຍໃນປະເທດ ຕາມການແບ່ງຂັ້ນຄຸ້ມຄອງ ແລະ ການມອບໝາຍຂອງຂັ້ນເທິງ;
11. ຝຶກອົບຮົມ, ສ້າງ, ບຳລຸງ, ຍົກລະດັບພະນັກງານ ກ່ຽວກັບວຽກງານສົ່ງເສີມ ແລະ ການຄຸ້ມຄອງ ທຸລະກິດນຳພາຍໃນປະເທດ, ບໍລິສັດຕົວແທນທຸລະກິດການທ່ອງທ່ຽວ ແລະ ພະນັກງານນຳທ່ຽວ;
12. ສະຫຼຸບ ແລະ ລາຍງານ ກ່ຽວກັບວຽກງານພັດທະນາ, ສົ່ງເສີມ ແລະ ການຄຸ້ມຄອງ ທຸລະກິດນຳທ່ຽວພາຍໃນປະເທດ ຕໍ່ຂັ້ນເທິງ ຢ່າງເປັນປົກກະຕິ;
13. ຈັດຕັ້ງປະຕິບັດຕາມແນວທາງນະໂຍບາຍ, ລະບຽບ, ກົດໝາຍ, ແຜນຍຸດທະສາດ, ແຜນການ, ໂຄງການ, ມາດຕະຖານ, ເງື່ອນໄຂ, ການພັດທະນາ ແລະ ການຄຸ້ມຄອງກ່ຽວກັບວຽກງານທຸລະກິດນຳທ່ຽວພາຍໃນປະເທດ ທີ່ລັດຖະບານວາງອອກ;
14. ປະສານສົມທົບກັບກົມຄຸ້ມຄອງທຸລະກິດການທ່ອງທ່ຽວ, ຂະແໜງໂຍທາທິການ ແລະ ຂົນສົ່ງ, ຂະແໜງປ້ອງກັນຄວາມສະຫງົບ ແລະ ຂະແໜງອື່ນທີ່ກ່ຽວຂ້ອງ ເພື່ອເຄື່ອນໄຫວຕິດຕາມກວດກາ ທຸລະກິດນຳທ່ຽວພາຍໃນປະເທດ ທີ່ຂຶ້ນກັບ ແລະ ຢູ່ໃນຂອບເຂດພື້ນທີ່ແຂວງ/ນະຄອນຫຼວງ ໃຫ້ມີຄວາມເປັນລະ ບຽບຮຽບຮ້ອຍສະຫງົບ ແລະ ປອດໄພ ຢ່າງຮອບດ້ານ;
15. ເກັບກຳສະຖິຕິ, ສະຫຼຸບ, ລາຍງານການຈັດຕັ້ງປະຕິບັດວຽກງານ, ການຈັດຕັ້ງ ແລະ ການເຄື່ອນໄຫວ ທຸລະກິດນຳທ່ຽວພາຍໃນປະເທດ ຢູ່ພາຍໃນຂອບເຂດແຂວງ/ນະຄອນຫຼວງ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ ໃຫ້ຂັ້ນເທິງ ລວມທັງສາຍຕັ້ງ ແລະ ສາຍຂວາງຂອງຕົນຊາບ ຢ່າງເປັນປົກກະຕິ 3 ເດືອນ, 6 ເດືອນ ແລະ 1 ປີ. ໃນກໍລະນີຈຳເປັນ ແລະ ຮີບດ່ວນ ຕ້ອງລາຍງານຂັ້ນເທິງຊາບ ແລະ ມີວິທີການແກ້ໄຂຢ່າງທັນການ;
16. ອຳນວຍຄວາມສະດວກ ແລະ ໃຫ້ການຮ່ວມມືທີ່ດີ ຕໍ່ການຈັດຕັ້ງ, ເຈົ້າໜ້າທີ່ກ່ຽວຂ້ອງ ແລະ ຂັ້ນເທິງຂອງຕົນ;
17. ຝຶກອົບຮົມ, ຍົກລະດັບປັບປຸງຄວາມຮູ້ ຄວາມສາມາດຂອງບຸກຄະລາກອນ ໃນຂົງເຂດວຽກງານ ທຸລະກິດນຳພາຍໃນປະເທດທີ່ຂຶ້ນກັບຄວາມຮັບຜິດ ຊອບຂອງຕົນ ໃຫ້ມີທັກສະ, ຄວາມຮູ້, ຄວາມສາມາດໃນແຕ່ລະດ້ານ ໃຫ້ມີຄຸນນະພາບ ແລະ ມາດຕະຖານ;
18. ຊີ້ນຳ-ນຳພາຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງ/ນະຄອນ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ ຢ່າງໃກ້ຊິດ;
19. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍແລະ ລະບຽບການ.

**ຄ. ສິດ ແລະ ໜ້າທີ່ ຂອງຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເມືອງ/ນະຄອນ:**

1. ຈັດຕັ້ງປະຕິບັດແນວທາງນະໂຍບາຍ, ແຜນຍຸດທະສາດ, ກົດໝາຍ, ຄຳສັ່ງ, ແຜນການ, ໂຄງການ, ການພັດທະນາ, ການຄຸ້ມຄອງ ແລະ ມາດຕະຖານ ກ່ຽວກັບວຽກງານທຸລະກິດນຳທ່ຽວ ໃນຂອບເຂດທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ ແລະ ການມອບໝາຍຂອງຂັ້ນເທິງ;
2. ຄົ້ນຄວ້າ, ພິຈາລະນາ ແລະ ນຳສະເໜີພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ/ນະຄອນຫຼວງເພື່ອຍ້ອງຍໍຊົມເຊີຍ ຫຼື ປະຕິບັດມາດຕະການ ຕໍ່ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ມີຜົນງານດີເດັ່ນ ຫຼື ລະເມີດໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຕາມການແບ່ງຂັ້ນຄຸ້ມຄອງ ແລະ ການມອບໝາຍຂອງຂັ້ນເທິງ;
3. ຄົ້ນຄວ້າ, ພິຈາລະນາ, ອອກອະນຸຍາດ, ໃບອະນຸຍາດດຳເນີນທຸລະກິດ, ໃບຢັ້ງຢືນການສືບຕໍ່ດຳເນີນທຸລະກິດ, ໃບຢັ້ງຢືນ ແລະ ໃບອະນຸຍາດຕ່າງໆ ຫຼື ເອກະສານຕ່າງໆ ກ່ຽວກັບ ການດຳເນີນທຸລະກິດນຳທ່ຽວໃນສະເພາະພື້ນທີ່ໃດໜຶ່ງ ໃຫ້ມີຄວາມສະດວກ, ວ່ອງໄວ, ໂປ່ງໃສ, ຍຸຕິທຳ ແລະ ຖືກຕ້ອງ;

4. ຄົ້ນຄວ້າ, ພິຈາລະນາ, ປັບປຸງແປງ, ຕັກເຕືອນ, ປັບໃໝ, ສັ່ງໂຈະ, ສັ່ງຖອນ ແລະ ສັ່ງຍຸບເລີກ ໃບອະນຸຍາດດໍາເນີນທຸລະກິດ, ໃບຢັ້ງຢືນການສືບຕໍ່ດໍາເນີນທຸລະກິດ, ໃບຢັ້ງຢືນອື່ນໆ, ເອກະສານທາງການ, ໂຄງການ, ກິດຈະການການດໍາເນີນທຸລະກິດນໍາທ່ຽວໃນສະເພາະພື້ນທີ່ໃດໜຶ່ງ ທີ່ເຄື່ອນໄຫວບໍ່ຖືກຕ້ອງ, ບໍ່ປະຕິບັດຕາມເປົ້າໝາຍການດໍາເນີນທຸລະກິດ ຫຼື ດໍາເນີນທຸລະກິດ ບໍ່ໄປຕາມສັນຍາ ຫຼື ລະເມີດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ ຕາມການແບ່ງຂັ້ນຄຸ້ມຄອງ ແລະ ການມອບໝາຍຂອງຂັ້ນເທິງ;
5. ປະສານສົມທົບ ເຈົ້າໜ້າທີ່ປ້ອງກັນຄວາມສະຫງົບ, ຫ້ອງການປົກຄອງບ້ານ ແລະ ຂະແໜງການທີ່ກ່ຽວຂ້ອງ ເພື່ອເຄື່ອນໄຫວຕິດຕາມກວດກາວຽກງານທຸລະກິດນໍາທ່ຽວ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ ຕາມການແບ່ງຂັ້ນຄຸ້ມຄອງ ແລະ ການມອບໝາຍຂອງຂັ້ນເທິງ ໃຫ້ມີຄວາມເປັນລະບຽບຮຽບຮ້ອຍ, ສະຫງົບ ແລະ ມີຄວາມປອດໄພ ຢ່າງຮອບດ້ານ;
6. ເກັບກໍາສະຖິຕິ, ສະຫຼຸບ, ລາຍງານ ການຈັດຕັ້ງປະຕິບັດ ແລະ ການເຄື່ອນໄຫວວຽກງານກ່ຽວກັບທຸລະກິດນໍາທ່ຽວ ທີ່ຂຶ້ນກັບຄວາມຮັບຜິດ ຊອບຂອງຕົນ ຕາມການແບ່ງຂັ້ນຄຸ້ມຄອງ ແລະ ການມອບໝາຍຂອງຂັ້ນເທິງ ລວມທັງສາຍຕັ້ງ ແລະ ສາຍຂວາງຂອງຕົນ ຊາບຢ່າງ ເປັນປົກກະຕິ 3 ເດືອນ, 6 ເດືອນ ແລະ 1 ປີ. ໃນກໍລະນີຈໍາເປັນ ແລະ ຮີບດ່ວນ ຕ້ອງລາຍງານຂັ້ນເທິງຂອງຕົນຊາບ ແລະ ມີວິທີການແກ້ໄຂ ຢ່າງທັນການ;
7. ອໍານວຍຄວາມສະດວກ ແລະ ໃຫ້ການຮ່ວມມື ເປັນຢ່າງດີ ຕໍ່ການຈັດຕັ້ງ, ເຈົ້າໜ້າທີ່ກ່ຽວຂ້ອງ ແລະ ຂັ້ນເທິງຂອງຕົນ;
8. ຝຶກອົບຮົມ, ຍົກລະດັບປັບປຸງຄວາມຮູ້ຄວາມສາມາດ ຂອງບຸກຄະລາກອນໃນຂົງເຂດວຽກງານທຸລະກິດນໍາທ່ຽວ ທີ່ຂຶ້ນກັບຄວາມຮັບຜິດ ຊອບຂອງຕົນ ໃຫ້ມີທັກສະ, ຄວາມຮູ້, ຄວາມສາມາດໃນແຕ່ລະດ້ານ ໃຫ້ມີຄຸນນະພາບ ແລະ ມາດຕະ ຖານ;
9. ຊຸກຍູ້, ຕິດຕາມ, ປະເມີນຜົນການຈັດຕັ້ງປະຕິບັດ ໂຄງການ, ກິດຈະການ ລວມທັງການຈັດຕັ້ງປະຕິບັດກົດໝາຍ ແລະ ລະບຽບການ ກ່ຽວກັບການສົ່ງເສີມການລົງທຶນ ແລະ ການດໍາເນີນທຸລະກິດນໍາທ່ຽວ, ຕາມຄວາມຮັບຜິດຊອບຂອງຕົນ;
10. ປະສານສົມທົບກັບບັນດາຂະແໜງການທີ່ກ່ຽວຂ້ອງ ພາຍໃນເມືອງ, ເທດສະບານ, ນະຄອນ ທີ່ຕົນຂຶ້ນກັບໃນການຄຸ້ມຄອງ, ຕິດຕາມກວດກາ ແລະ ແກ້ໄຂບັນຫາຕ່າງໆ ຫຼື ປະກົດການຫຍໍ້ທໍ້ທີ່ເກີດຂຶ້ນໃນບັນດາໂຄງການ ແລະ ກິດຈະການ ທຸລະກິດນໍາທ່ຽວ;
11. ອໍານວຍຄວາມສະດວກ, ສະໜັບສະໜູນການເຄື່ອນໄຫວວຽກງານການບໍລິການ ການລົງທຶນປະຕູດຽວໃຫ້ມີຄວາມວ່ອງໄວ, ໂປ່ງໃສ, ຍຸຕິທໍາ ແລະ ມີປະສິດທິຜົນ ຕາມຄວາມຮັບຜິດຂອງຕົນ;
12. ສະເໜີການສ້າງ, ບໍາລຸງ, ຍົກລະດັບພະນັກງານ ກ່ຽວກັບວຽກງານສົ່ງເສີມ ແລະ ຄຸ້ມຄອງທຸລະກິດນໍາທ່ຽວ;
13. ສະຫຼຸບ, ລາຍງານກ່ຽວກັບວຽກງານສົ່ງເສີມ ແລະ ຄຸ້ມຄອງທຸລະກິດນໍາທ່ຽວ ຕໍ່ຂັ້ນເທິງ ຢ່າງເປັນປົກກະຕິ;
14. ໃຊ້ສິດ ແລະ ໜ້າທີ່ອື່ນ ຕາມກົດໝາຍແລະ ລະບຽບການ.

**ມາດຕາ 56 ຄວາມຮັບຜິດຊອບຂອງອົງການປົກຄອງບ້ານ**

ອົງການປົກຄອງບ້ານ ມີຄວາມຮັບຜິດຊອບ ດັ່ງນີ້:

1. ຈັດຕັ້ງປະຕິບັດແນວທາງນະໂຍບາຍ, ກົດໝາຍ, ລະບຽບການ, ຄໍາສັ່ງ, ແຜນຍຸດທະສາດ, ແຜນການ ໂຄງການ, ການພັດທະນາ, ການຄຸ້ມຄອງ ແລະ ມາດຕະຖານກ່ຽວກັບວຽກງານທຸລະກິດນໍາທ່ຽວ ພາຍໃນຂອບເຂດບ້ານ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ.
2. ໃຫ້ການຮ່ວມມືທີ່ດີ ຕໍ່ກັບຂະແໜງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວເມືອງ, ຂະແໜງປ້ອງກັນຄວາມສະຫງົບ ແລະ ຂະແໜງການອື່ນທີ່ກ່ຽວຂ້ອງ ໃນການຈັດຕັ້ງປະຕິບັດວຽກງານຄຸ້ມຄອງຕິດຕາມກວດກາ ແລະ ອໍານວຍຄວາມສະດວກກ່ຽວກັບການຈັດຕັ້ງ ແລະ ການເຄື່ອນໄຫວທຸລະກິດນໍາທ່ຽວ ພາຍໃນຂອບເຂດບ້ານທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ.
3. ລາຍງານການຈັດຕັ້ງ ແລະ ການເຄື່ອນໄຫວວຽກງານທຸລະກິດນໍາທ່ຽວ ພາຍໃນຂອບເຂດບ້ານ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ ໃຫ້ຂະແໜງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ຊາບຢ່າງເປັນ

ປົກກະຕິ. ໃນກໍລະນີຈຳເປັນ ແລະ ຮີບດ່ວນ ຕ້ອງລາຍງານຂັ້ນເທິງຂອງຕົນຊາບ ແລະ ມີວິທີການແກ້ໄຂ ຢ່າງທັນການ.

4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

### ມາດຕາ 57 ຄວາມຮັບຜິດຊອບຂອງຂະແໜງການອື່ນ

ຂະແໜງການອື່ນ ມີໜ້າທີ່ໃນການຈັດຕັ້ງປະຕິບັດ, ອຳນວຍຄວາມສະດວກ, ໃຫ້ການຮ່ວມມືທີ່ດີ ໃນການຄຸ້ມຄອງຕິດຕາມກວດກາ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ.

## ພາກທີ VIII
## ການແບ່ງຂັ້ນຄຸ້ມຄອງ ແລະ ການກວດກາວຽກງານທຸລະກິດນຳທ່ຽວ
## ໝວດທີ 1
## ຈຸດປະສົງ ແລະ ການແບ່ງຂັ້ນຄຸ້ມຄອງ

### ມາດຕາ 58 ຈຸດປະສົງການແບ່ງຂັ້ນຄຸ້ມຄອງ

ເພື່ອໃຫ້ສອດຄ່ອງກັບກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງຂອງລັດ ທັງເປັນການກະຈາຍອຳນາດລົງສູ່ທ້ອງຖິ່ນ ທີ່ມີຄວາມພ້ອມ ແລະ ເປັນການສ້າງສິ່ງອຳນວຍຄວາມສະດວກໃຫ້ກັບພາກທຸລະກິດ ຕາມນະໂຍບາຍສົ່ງເສີມການລົງທຶນຜ່ານລະບົບປະຕູດຽວ ແລະ ການອະນຸຍາດດຳເນີນທຸລະກິດຂອງຂະແໜງການ ໃຫ້ມີຄວາມສະດວກ, ວ່ອງໄວ ແລະ ມີຄວາມໂປ່ງໃສ.

ການຄຸ້ມຄອງຫົວໜ່ວຍທຸລະກິດນຳທ່ຽວ ຈຶ່ງມີຄວາມຈຳເປັນ ໃນການຊຸກຍູ້ສົ່ງເສີມ ແລະ ເສີມຂະຫຍາຍຈຸດບໍລິການໃຫ້ກັບພາກທຸລະກິດ ທັງພາຍໃນ ແລະ ຕ່າງປະເທດ ຢູ່ຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນ ຢ່າງທົ່ວເຖິງ, ມີຄວາມສະດວກວ່ອງໄວ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ.

### ມາດຕາ 59 ການຄຸ້ມຄອງທຸລະກິດນຳທ່ຽວ ຂັ້ນສູນກາງ

ຂັ້ນສູນກາງ ມອບໃຫ້ກົມຄຸ້ມຄອງທຸລະກິດການທ່ອງທ່ຽວ ເປັນເສນາທິການໃຫ້ລັດຖະມົນຕີກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ໃນການຄຸ້ມຄອງ ແລະ ຕິດຕາມກວດກາບັນດາຫົວໜ່ວຍທຸລະກິດນຳທ່ຽວ ທັງເປັນເຈົ້າການຄົ້ນຄວ້າພິຈາລະນາ ອະນຸຍາດການດຳເນີນທຸລະກິດ, ອະນຸຍາດການສືບຕໍ່ດຳເນີນທຸລະກິດຂອງຫົວໜ່ວຍທຸລະກິດນຳທ່ຽວລະຫວ່າງປະເທດ, ບໍລິສັດຕົວແທນທຸລະກິດການທ່ອງທ່ຽວ ໂດຍປະຕິບັດຕາມພາລະບົດບາດ, ສິດ, ໜ້າທີ່, ຂັ້ນຕອນ ແລະ ເງື່ອນໄຂຂອງຂໍ້ຕົກລົງສະບັບນີ້ ເປັນເອກະພາບໃນຂອບເຂດທົ່ວປະເທດ ບົນພື້ນຖານການປະສານສົມທົບແໜ້ນກັບພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ/ນະຄອນຫຼວງ, ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວເມືອງ/ນະຄອນ ແລະ ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງ.

### ມາດຕາ 60 ການຄຸ້ມຄອງທຸລະກິດນຳທ່ຽວ ຂັ້ນທ້ອງຖິ່ນ

ຂັ້ນທ້ອງຖິ່ນ ມອບໃຫ້ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ/ນະຄອນຫຼວງ, ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວເມືອງ/ນະຄອນ ເປັນເສນາທິການໃຫ້ລັດຖະມົນຕີ, ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ເຈົ້າແຂວງ/ເຈົ້າຄອງນະຄອນຫຼວງວຽງຈັນ, ເຈົ້າເມືອງ/ເຈົ້ານະຄອນ ທີ່ກ່ຽວຂ້ອງໃນການຄົ້ນຄວ້າພິຈາລະນາອະນຸຍາດການດຳເນີນທຸລະກິດ, ການອະນຸຍາດການສືບຕໍ່ດຳເນີນທຸລະກິດ, ການຄຸ້ມຄອງ ແລະ ຕິດຕາມກວດກາຫົວໜ່ວຍທຸລະກິດນຳທ່ຽວພາຍໃນປະເທດ ແລະ ຫົວໜ່ວຍທຸລະກິດນຳທ່ຽວໃນພື້ນທີ່ສະເພາະໃດໜຶ່ງ ທີ່ຂຶ້ນກັບຄວາມຮັບຜິດຊອບຂອງຕົນ ທີ່ຕັ້ງຢູ່ແຂວງ/ນະຄອນຫຼວງ, ເມືອງ/ນະຄອນ ດັ່ງນີ້:

ມອບໃຫ້ພະແນກເປັນເຈົ້າການຄົ້ນຄວ້າພິຈາລະນາອະນຸຍາດການດໍາເນີນທຸລະກິດ, ການອະນຸຍາດການສືບຕໍ່ດໍາເນີນທຸລະກິດ ຕໍ່ຫົວໜ່ວຍທຸລະກິດນໍາທ່ຽວພາຍໃນປະເທດ ທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໂດຍປະຕິບັດຕາມພາລະບົດບາດ, ສິດ, ໜ້າທີ່, ເງື່ອນໄຂ ແລະ ຂັ້ນຕອນດຽວກັນກັບຂັ້ນສູນກາງ ພ້ອມທັງຄຸ້ມຄອງ ແລະ ຕິດຕາມກວດກາຫົວໜ່ວຍທຸລະກິດນໍາທ່ຽວລະຫວ່າງປະເທດ, ບໍລິສັດຕົວແທນທຸລະກິດການທ່ອງທ່ຽວ ທີ່ຕັ້ງຢູ່ແຂວງ/ນະຄອນຫຼວງ ໂດຍປະສານສົມທົບແໜ້ນ ກັບກົມຄຸ້ມຄອງທຸລະກິດການທ່ອງທ່ຽວ ແລະ ພາກສ່ວນທີ່ກ່ຽວຂ້ອງ ລວມທັງສາຍຕັ້ງ ແລະ ສາຍຂວາງຂອງຕົນ.

ມອບໃຫ້ຫ້ອງການຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວເມືອງ/ນະຄອນ ເປັນເຈົ້າການຄົ້ນຄວ້າພິຈາລະນາອະນຸຍາດການດໍາເນີນທຸລະກິດ, ການອະນຸຍາດການສືບຕໍ່ດໍາເນີນທຸລະກິດ ຕໍ່ຫົວໜ່ວຍທຸລະກິດນໍາທ່ຽວສະເພາະພື້ນທີ່ໃດໜຶ່ງ ທີ່ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໂດຍປະຕິບັດຕາມພາລະບົດບາດ, ສິດ, ໜ້າທີ່, ເງື່ອນໄຂ ແລະ ຂັ້ນຕອນດຽວກັນກັບຂັ້ນພະແນກຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວແຂວງ/ນະຄອນຫຼວງ ພ້ອມທັງຄຸ້ມຄອງ ແລະ ຕິດຕາມກວດກາຫົວໜ່ວຍທຸລະກິດນໍາທ່ຽວພາຍໃນປະເທດ ທີ່ຕັ້ງຢູ່ເມືອງ/ນະຄອນ ໂດຍປະສານສົມທົບແໜ້ນ ກັບພະແນກຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ແລະ ພາກສ່ວນທີ່ກ່ຽວຂ້ອງ ລວມທັງສາຍຕັ້ງ ແລະ ສາຍຂວາງຂອງຕົນ.

ສໍາລັບການຈັດຕັ້ງປະຕິບັດຕົວຈິງ ກ່ຽວກັບການແບ່ງຂັ້ນຄຸ້ມຄອງຢູ່ຂັ້ນທ້ອງຖິ່ນ ສະເພາະເມືອງ ຢູ່ເຂດຫ່າງໄກສອກຫຼີກ ຫຼື ບໍ່ທັນມີຄວາມພ້ອມ ແມ່ນມອບໃຫ້ພະແນກຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວແຂວງ/ນະຄອນຫຼວງ ທີ່ກ່ຽວຂ້ອງ ເປັນຜູ້ພິຈາລະນາຕາມເງື່ອນໄຂ ແລະ ທ່າແຮງຄວາມສາມາດຂອງແຕ່ລະທ້ອງຖິ່ນ.

## ໝວດທີ 2
## ການກວດກາວຽກງານທຸລະກິດນໍາທ່ຽວ

### ມາດຕາ 61 ອົງການກວດກາ

ອົງການກວດກາວຽກງານທຸລະກິດທຸລະກິດນໍາທ່ຽວ ປະກອບດ້ວຍ:

1. ອົງການກວດກາພາຍໃນ ຊຶ່ງແມ່ນອົງການດຽວກັນກັບ ອົງການຄຸ້ມຄອງວຽກງານທຸລະກິດນໍາທ່ຽວ ຕາມທີ່ໄດ້ກໍານົດໄວ້ ມາດຕາ 55 ຂອງຂໍ້ຕົກລົງສະບັບນີ້;
2. ອົງການກວດກາພາຍນອກ ຊຶ່ງແມ່ນສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ, ອົງການກວດກາລັດ, ອົງການກວດສອບແຫ່ງລັດ ກວດສອບຕາມພາລະບົດບາດຂອງຕົນ ທີ່ໄດ້ກໍານົດໄວ້ໃນກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ;
3. ກົມຄຸ້ມຄອງທຸລະກິດການທ່ອງທ່ຽວ ເປັນເຈົ້າການປະສານສົມທົບກັບຄະນະກໍາມະການປະສານງານການບໍລິການລົງທຶນປະຕູດຽວ ຂອງຂະແໜງຖະແຫຼງຂ່າວ, ວັດທະນະທໍາ ແລະ ທ່ອງທ່ຽວ ແລະ ເປັນເຈົ້າການປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ ຂັ້ນສູນກາງ ແລະ ທ້ອງຖິ່ນ ໃນການຕິດ ຕາມ, ກວດກາການດໍາເນີນງານຂອງຫົວໜ່ວຍທຸລະກິດນໍາທ່ຽວ ໃນຂອບເຂດທົ່ວປະເທດ.

### ມາດຕາ 62 ເນື້ອໃນການກວດກາ

ທຸກການເຄື່ອນໄຫວຂອງບັນດາກິດຈະການ, ກິດຈະກໍາທ່ອງທ່ຽວ, ລາຍການທ່ອງທ່ຽວ, ສັນຍາແຮງງານ, ການດໍາເນີນງານຂອງຫົວໜ່ວຍທຸລະກິດນໍາທ່ຽວ ແຕ່ລະປະເພດ ລ້ວນແຕ່ໄດ້ຮັບການຄຸ້ມຄອງ ແລະ ຕິດຕາມກວດກາ ຈາກອົງການກວດກາວຽກງານຄຸ້ມຄອງຫົວໜ່ວຍທຸລະກິດນໍາທ່ຽວ ຕາມທີ່ໄດ້ກໍານົດຢູ່ໃນຂໍ້ຕົກລົງສະ ບັບນີ້.

ເນື້ອໃນກວດກາ ມີດັ່ງນີ້:

1. ກວດກາ ການປະຕິບັດກົດໝາຍ ແລະ ລະບຽບການທີ່ກ່ຽວຂ້ອງ;
2. ກວດກາ ການປົກປັກຮັກສາສິ່ງແວດລ້ອມ ຕາມແຜນຄຸ້ມຄອງສິ່ງແວດລ້ອມ ແລະ ສັງຄົມ;
3. ກວດກາ ການປະຕິບັດມາດຕະຖານ ຂອງຫົວໜ່ວຍທຸລະກິດນໍາທ່ຽວ ລວມທັງການບໍລິການ ແລະ ການໂຄສະນາ.

ອີງການກວດກາວຽກງານຄຸ້ມຄອງຫົວໜ່ວຍທຸລະກິດນຳທ່ຽວ ສາມາດສະເໜີມາດຕະການແກ້ໄຂຕໍ່ຂະແໜງການທີ່ກ່ຽວຂ້ອງ ເພື່ອພິຈາລະນາໃນກໍລະນີພົບເຫັນການລະເມີດກົດໝາຍ ແລະ ລະບຽບການກ່ຽວກັບວຽກງານຄຸ້ມຄອງຫົວໜ່ວຍທຸລະກິດນຳທ່ຽວ.

**ມາດຕາ 63 ຮູບການກວດກາ**

ການກວດກາ ມີ 3 ຮູບການ ດັ່ງນີ້:

1. ກວດກາ ຕາມລະບົບປົກກະຕິ;
2. ກວດກາ ໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ;
3. ກວດກາ ແບບກະທັນຫັນ.

ການກວດກາຕາມລະບົບປົກກະຕິ ແມ່ນ ການກວດກາທີ່ມີລັກສະນະເປັນປະຈຳ ແລະ ມີກຳນົດເວລາອັນແນ່ນອນ ຊຶ່ງຕ້ອງປະຕິບັດຢ່າງໜ້ອຍໜຶ່ງຄັ້ງຕໍ່ປີ ໂດຍກົມຄຸ້ມຄອງທຸລະກິດການທ່ອງທ່ຽວ ເປັນເຈົ້າການປະສານສົມທົບກັບຄະນະກຳມະການປະສານງານການບໍລິການລົງທຶນປະຕູດຽວ ຂອງຂະແໜງຖະແຫຼງຂ່າວ, ວັດທະ ນະທຳ ແລະ ທ່ອງທ່ຽວ ແລະ ຂະແໜງການທີ່ກ່ຽວຂ້ອງຂັ້ນສູນກາງ ແລະ/ຫຼື ທ້ອງຖິ່ນ.

ການກວດກາໂດຍມີການແຈ້ງໃຫ້ຮູ້ລ່ວງໜ້າ ແມ່ນການກວດການອກແຜນການ ເມື່ອເຫັນວ່າມີຄວາມຈຳເປັນ ຊຶ່ງຕ້ອງແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ ຢ່າງໜ້ອຍ 24 ຊົ່ວໂມງ.

ການກວດກາແບບກະທັນຫັນ ແມ່ນການກວດກາໃນເວລາທີ່ເຫັນວ່າມີຄວາມຈຳເປັນ ແລະ ຮີບດ່ວນ ໂດຍບໍ່ມີການແຈ້ງໃຫ້ຜູ້ຖືກກວດກາຮູ້ລ່ວງໜ້າ.

ການກວດກາ ສາມາດດຳເນີນການກວດກາ ດ້ານເອກະສານ ແລະ ການປະຕິບັດຕົວຈິງຢູ່ສະຖານທີ່ປະຕິບັດງານ.

## ພາກທີ IX
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 64 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະຕິບັດກົດໝາຍ, ລະບຽບການ ແລະ ຂໍ້ຕົກລົງສະບັບນີ້ ເຊັ່ນ: ການໄດ້ຮັບໃບຢັ້ງຢືນມາດຕະຖານທຸລະກິດນຳທ່ຽວ ຫຼື ການນຳທ່ຽວຕາມເງື່ອນໄຂ ແລະ ກຳນົດເວລາ, ການບໍລິຈາກ ເພື່ອຊ່ວຍເຫຼືອສັງຄົມ ແລະ ອື່ນໆ ຈະໄດ້ຮັບການຍ້ອງຍໍ ແລະ ນະໂຍບາຍ ຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

**ມາດຕາ 65 ມາດຕະການຕໍ່ກັບຜູ້ລະເມີດ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປະຕິບັດມາດຕະການສຶກສາອົບຮົມ, ລົງວິໄນ, ປັບໃໝ, ໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ຖືກດຳເນີນຄະດີອາຍາ ແລ້ວແຕ່ກໍລະນີເບົາ, ໜັກຕາມກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

**ມາດຕາ 66 ມາດຕະການສຶກສາອົບຮົມ ແລະ ກ່າວເຕືອນ**

ໃນກໍລະນີເປັນການກະທຳຜິດຄັ້ງທີໜຶ່ງ ແລະ ເປັນໂທດສະຖານເບົາ ທີ່ບໍ່ມີຄວາມເສຍຫາຍ ຫຼື ບາດເຈັບອັນຕະລາຍ ຈະຖືກສຶກສາອົບຮົມ, ກ່າວເຕືອນ ດ້ວຍຮູບການ ແລະ ວິທີການຕ່າງໆ ຕາມກົດໝາຍ ພ້ອມທັງແຈ້ງເຫດຜົນ ແລະ ການກະທຳຜິດໃຫ້ຮັບຊາບ ແລະ ລົງບັນທຶກໄວ້ເປັນຫຼັກຖານ.

**ມາດຕາ 67 ມາດຕະການປັບໃໝ ແລະ ໃຊ້ແທນຄ່າເສຍຫາຍ**

ໃນກໍລະນີ ເກີດຄວາມເສຍຫາຍ ແລະ ບາດເຈັບ:

- ຄັ້ງທີໜຶ່ງ: ສຶກສາອົບຮົມ, ລົງບັນທຶກ, ປັບໃໝ ບໍ່ເກີນ 2.000.000 ກີບ ແລະ ໃຊ້ແທນຄ່າເສຍຫາຍທັງໝົດ;

– ຄັ້ງທີສອງ: ສຶກສາອົບຮົມ, ລົງບັນທຶກ, ປັບໃໝ ບໍ່ເກີນ 4.000.000 ກີບ ແລະ ໃຊ້ແທນຄ່າເສຍຫາຍທັງໝົດ ແລະ ໂຈະການດຳເນີນທຸລະກິດຊົ່ວຄາວ 6 ເດືອນ;
– ຄັ້ງທີສາມ: ສຶກສາອົບຮົມ, ລົງບັນທຶກ, ປັບໃໝ ບໍ່ເກີນ 6.000.000 ກີບ ແລະ ໃຊ້ແທນຄ່າເສຍຫາຍທັງໝົດ, ຖອນໃບອະນຸຍາດດຳເນີນທຸລະກິດຖາວອນ ແລະ ດຳເນີນຄະດີຕາມກົດໝາຍ.
– ສຳລັບບຸກຄົນຕ່າງປະເທດ ນຳທ່ຽວໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ 15.000.000 ກີບ ແລະ ຈະຖືກນຳສົ່ງກັບຄືນປະເທດ ຕາມລະບຽບກົດໝາຍຂອງ ສປປ ລາວ.

## ພາກທີ X
## ບົດບັນຍັດສຸດທ້າຍ

**ມາດຕາ 68 ການຈັດຕັ້ງປະຕິບັດ**

ມອບໃຫ້ກົມຄຸ້ມຄອງທຸລະກິດການທ່ອງທ່ຽວ ເປັນເຈົ້າການປະສານສົມທົບກັບຄະນະກຳມະການປະສານງານການບໍລິການລົງທຶນປະຕູດຽວຂອງກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ, ພະແນກຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວແຂວງ/ນະຄອນຫຼວງ, ຫ້ອງການຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວເມືອງ/ນະຄອນ, ພາກສ່ວນກ່ຽວຂ້ອງຂັ້ນສູນກາງ ແລະ ທ້ອງຖິ່ນ ເປັນຜູ້ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໂດຍການສ້າງລະບົບເອເລັກໂຕຣນິກ ເຊື່ອມຕໍ່ລະບົບອອນລາຍ ໃນການສື່ສານ, ການເກັບກຳຂໍ້ມູນ, ເອກະສານ, ແບບຟອມ, ຄຳຮ້ອງ ແລະ/ຫຼື ການອະນຸມັດລາຍເຊັນໃນຮູບແບບເອເລັກໂຕຣນິກ ໃຫ້ມີຄວາມທັນສະໄໝ, ສະ ດວກ, ວ່ອງໄວ ແລະ ມີຄວາມໂປ່ງໃສ.

ກົມກອງ, ອົງການປົກຄອງຂັ້ນທ້ອງຖິ່ນ, ບຸກຄົນ, ນິຕິບຸກຄົນ, ຜູ້ປະກອບກິດຈະການທຸລະກິດນຳທ່ຽວລະຫວ່າງປະເທດ, ຕົວແທນທຸລະກິດການທ່ອງທ່ຽວ ທັງພາຍໃນ ແລະ ຕ່າງປະເທດ, ທຸລະກິດນຳທ່ຽວພາຍໃນປະເທດ, ທຸລະກິດນຳທ່ຽວສະເພາະພື້ນທີ່ໃດໜຶ່ງ ທີ່ເຄື່ອນໄຫວດຳເນີນທຸລະກິດນຳທ່ຽວ ຢູ່ ສປປ ລາວ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ ແລະ ເປັນເອກະພາບໃນຂອບເຂດທົ່ວປະເທດ.

**ມາດຕາ 69 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນ ແລະ ໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ ລັດຖະການ.

ຂໍ້ຕົກລົງສະບັບນີ້ ປ່ຽນແທນຂໍ້ກຳນົດ ວ່າດ້ວຍ ການສ້າງຕັ້ງ ແລະ ການເຄື່ອນໄຫວທຸລະກິດທ່ອງທ່ຽວ ສະບັບເລກທີ 1150/ສນຍ, ລົງວັນທີ 25/10/1993.

**ລັດຖະມົນຕີ**

ກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ

ລັດຖະມົນຕີ

ສວນສະຫວັນ ວິຍະເກດ